# ສາລະບານ


ພາກທີ I ບົດບັນຍັດທົ່ວໄປ ........ 1
ມາດຕາ 1 ຈຸດປະສົງ ........ 1
ມາດຕາ 2 ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 1
ມາດຕາ 3 ການອະທິບາຍຄຳສັບ ........ 2
ມາດຕາ 4 ຂອບເຂດການນຳໃຊ້ ........ 2
ພາກທີ II ປະເພດ ແລະ ຂະໜາດ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 2
ມາດຕາ 5 ປະເພດໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 2
ມາດຕາ 6 ໂຮງງານເລື່ອຍໄມ້ ........ 2
ມາດຕາ 7 ໂຮງງານປຸງແຕ່ງໄມ້ ........ 2
ມາດຕາ 8 ໂຮງງານເຟີນີເຈີ ........ 2
ມາດຕາ 9 ໂຮງເຟີນີເຈີແບບຄອບຄົວ ........ 3
ມາດຕາ 10 ຂະໜາດຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 3
ພາກທີ III ມາດຕະຖານ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 3
ໝວດທີ 1 ມາດຕະຖານ ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ........ 3
ມາດຕາ 11 ມາດຕະຖານ ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ........ 3
ມາດຕາ 12 ມາດຕະຖານສະຖານທີ່ຕັ້ງ ........ 3
ມາດຕາ 13 ມາດຕະຖານ ອາຄານຜະລິດ ແລະ ສິ່ງປຸກສ້າງ ........ 4
ມາດຕາ 14 ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ ........ 4
ມາດຕາ 15 ມາດຕະຖານຂະບວນການຜະລິດ ........ 4
ມາດຕາ 16 ມາດຕະຖານ ວິຊາການ ແລະ ກຳມະກອນ ........ 4
ມາດຕາ 17 ມາດຕະຖານຄວາມປອດໄພ ........ 5
ມາດຕາ 18 ມາດຕະຖານສຸຂານາໄມ ........ 5
ມາດຕາ 19 ມາດຕະຖານສິ່ງແວດລ້ອມ ........ 5
ມາດຕາ 20 ມາດຕະຖານການບໍລິຫານ ........ 5
ໝວດທີ 2 ມາດຕະຖານ ໂຮງເຟີນີເຈີແບບຄອບຄົວ ........ 6
ມາດຕາ 21 ມາດຕະຖານໂຮງເຟີນີເຈີແບບຄອບຄົວ ........ 6
ມາດຕາ 22 ມາດຕະຖານສະຖານທີ່ຕັ້ງ ........ 6
ມາດຕາ 23 ມາດຕະຖານອາຄານຜະລິດ ........ 6
ມາດຕາ 24 ມາດຕະຖານເຄື່ອງຈັກ ........ 6
ມາດຕາ 25 ມາດຕະຖານຄວາມປອດໄພ ແລະ ສຸຂານາໄມ ........ 6
ມາດຕາ 26 ມາດຕະຖານສິ່ງແວດລ້ອມ ........ 7
ພາກທີ IV ການສ້າງຕັ້ງ ແລະ ດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 7
ໝວດທີ 1 ການສ້າງຕັ້ງ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 7
ມາດຕາ 27 ການສະເໜີສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 7
ມາດຕາ 28 ເງື່ອນໄຂໃນການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 7
ມາດຕາ 29 ເອກະສານ ຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 7
ມາດຕາ 30 ບົດວິພາກເສດຖະກິດ-ເຕັກນິກໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 8
ມາດຕາ 31 ຂັ້ນຕອນການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 9
ມາດຕາ 32 ການກວດກາສະຖານທີ່ຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 9
ມາດຕາ 33 ການພິຈາລະນາ ອອກຂໍ້ຕົກລົງອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 10
ໝວດທີ 2 ການດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 10
ມາດຕາ 34 ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 10
ມາດຕາ 35 ເງື່ອນໄຂການຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ........ 10

ມາດຕາ 36 ການປະກອບເອກະສານ ສະເໜີຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງໄມ້ ..... 11
ມາດຕາ 37 ການຄົ້ນຄວ້າເອກະສານການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 11
ມາດຕາ 38 ການລົງກວດກາ ແລະ ປະເມີນ ໂຮງງານ ເພື່ອພິຈາລະນາ ອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 12
ມາດຕາ 39 ການພິຈາລະນາ ແລະ ການອອກໃບຢັ້ງຢືນ ການດຳເນີນກິດຈະການໂຮງງານອຸດສາ ຫະກຳປຸງແຕ່ງໄມ້ ..... 12
ມາດຕາ 40 ການຕໍ່ອາຍຸໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 12
ມາດຕາ 41 ການໂຈະ ແລະ ຍຸບເລີກ ໃບຢັ້ງຢືນ ກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 13
ມາດຕາ 42 ການຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານຄືນໃໝ່ ..... 13
ມາດຕາ 43 ຄ່າທຳນຽມ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ..... 13
ພາກທີ V ກິດຈະກຳ ການຄຸ້ມຄອງ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 13
ມາດຕາ 44 ກິດຈະກຳ ການຄຸ້ມຄອງໂຮງງານ ..... 13
ມາດຕາ 45 ການສ້າງແຜນການເຄື່ອນໄຫວຂອງໂຮງງານ ..... 14
ມາດຕາ 46 ການຄຸ້ມຄອງສະຖານທີ່, ອາຄານ, ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ..... 14
ມາດຕາ 47 ການຄຸ້ມຄອງຂະບວນການຜະລິດ ແລະ ປຸງແຕ່ງ ..... 14
ມາດຕາ 48 ການຄຸ້ມຄອງການນຳເຂົ້າວັດຖຸດິບ ..... 15
ມາດຕາ 49 ການຄຸ້ມຄອງຜະລິດຕະພັນ ..... 15
ມາດຕາ 50 ການຄຸ້ມຄອງການກຳຈັດ ແລະ ບຳບັດສິ່ງເສດເຫຼືອ ..... 15
ມາດຕາ 51 ການຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມໂຮງງານ ..... 15
ພາກທີ VI ການປ່ຽນແປງ ແລະ ການດັດສົມ ຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 16
ໝວດທີ 1 ການປ່ຽນແປງ ໂຮງງານອຸດຫະກຳປຸງແຕ່ງໄມ້ ..... 16
ມາດຕາ 52 ການປ່ຽນແປງໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 16
ມາດຕາ 53 ການຂະຫຍາຍໂຮງງານ ..... 16
ມາດຕາ 54 ການຍົກຍ້າຍໂຮງງານ ..... 17
ມາດຕາ 55 ການຍົກຍ້າຍເຄື່ອງຈັກ ..... 17
ມາດຕາ 56 ການໂອນ, ການໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານ ..... 17
ມາດຕາ 57 ການສືບທອດການດຳເນີນກິດຈະການໂຮງງານ ..... 17
ມາດຕາ 58 ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ..... 18
ໝວດທີ 2 ການດັດສົມ ໂຮງງານອຸດຫະກຳປຸງແຕ່ງໄມ້ ..... 18
ມາດຕາ 59 ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 18
ມາດຕາ 60 ຂັ້ນຕອນການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 18
ມາດຕາ 61 ການກວດກາໂຮງງານ ..... 18
ມາດຕາ 62 ການກຳນົດແຜນການປັບປຸງໂຮງງານ ..... 19
ມາດຕາ 63 ການຢັ້ງຢືນຜົນການປັບປຸງໂຮງງານ ..... 19
ພາກທີ VII ອົງການຄຸ້ມຄອງ ແລະ ກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 19
ມາດຕາ 64 ອົງການຄຸ້ມຄອງ ແລະ ກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 19
ມາດຕາ 65 ສິດ ແລະ ໜ້າທີ່ ຂອງກົມປ່າໄມ້ ..... 19
ມາດຕາ 66 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ..... 20
ມາດຕາ 67 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ..... 20
ມາດຕາ 68 ການກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 21
ມາດຕາ 69 ຮູບການກວດກາໂຮງງານອຸດສາຫະກຳປຸງແຕ່ງໄມ້ ..... 21
ມາດຕາ 70 ການກວດກາຕາມລະບົບປົກກະຕິ ..... 21
ມາດຕາ 71 ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ..... 21
ມາດຕາ 72 ການກວດກາແບບກະທັນຫັນ ..... 21

ພາກທີ VIII ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ... 22
ມາດຕາ 73 ສິດ ຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ... 22
ມາດຕາ 74 ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ... 22
ພາກທີ IX ຂໍ້ຫ້າມ ... 23
ມາດຕາ 75 ຂໍ້ຫ້າມທົ່ວໄປ ... 23
ມາດຕາ 76 ຂໍ້ຫ້າມ ສຳລັບ ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ... 23
ມາດຕາ 77 ຂໍ້ຫ້າມ ສຳລັບ ເຈົ້າໜ້າທີ່ ແລະ ພະນັກງານ ... 23
ພາກທີ X ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ... 24
ມາດຕາ 78 ນະໂຍບາຍຕໍ່ຜູ້ມີຜົນງານ ... 24
ມາດຕາ 79 ມາດຕະການຕໍ່ຜູ້ລະເມີດ ... 24
ພາກທີ XI ບົດບັນຍັດສຸດທ້າຍ ... 24
ມາດຕາ 80 ການຈັດຕັ້ງປະຕິບັດ ... 24
ມາດຕາ 81 ຜົນສັກສິດ ... 24

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1044/ກປ
ນະຄອນຫຼວງວຽງຈັນ, ວັນທີ 16 JAN 2023

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມປ່າໄມ້ ສະບັບເລກທີ 7467/ກປມ, ລົງວັນທີ 27 ທັນວາ 2022.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ປະເພດ, ຂະໜາດ, ມາດຕະຖານໂຮງງານ, ການສ້າງຕັ້ງ, ການດຳເນີນກິດຈະການ, ການຄຸ້ມຄອງ ແລະ ການສົ່ງເສີມ ອຸດສາຫະກຳປຸງແຕ່ງໄມ້ ຕາມທິດທັນເປັນທັນສະໄໝ ເພື່ອເຮັດໃຫ້ວຽກງານອຸດສາຫະກຳປຸງແຕ່ງໄມ້ ໄດ້ຕາມມາດຕະຖານ, ມີປະສິດທິພາບ, ປະສິດທິຜົນສູງ ແນໃສ່ ຍົກລະດັບສະມັດຖະພາບການຜະລິດ, ສ້າງມູນຄ່າເພີ່ມ, ສ້າງຜະລິດຕະພັນໃຫ້ໄດ້ມາດຕະຖານ ແລະ ມີຄຸນນະພາບສູງ ຕິດພັນກັບ ການຄຸ້ມຄອງຕ່ອງໂສ້ການສະໜອງໄມ້ ແລະ ປົກປັກຮັກສາສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້

ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ແມ່ນ ການຄຸ້ມຄອງການສ້າງຕັ້ງ ແລະ ການດຳເນີນກິດຈະການ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກຂອງໂຮງງານ ພ້ອມທັງ ຊຸກຍູ້, ຕິດຕາມ, ກວດກາ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂຮງງານອຸດສາຫະກໍາປຸງແຕ່ງໄມ້** ໝາຍເຖິງ ສະຖານທີ່ປຸງແຕ່ງທີ່ນໍາໃຊ້ໄມ້ເປັນວັດຖຸດິບເຂົ້າຜ່ານຂະບວນການປຸງແຕ່ງ ປ່ຽນຈາກສະພາບເດີມ ມາເປັນຜະລິດຕະພັນໄມ້ ເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ດ້ວຍການນໍາໃຊ້ເຄື່ອງຈັກ ແລະ ແຮງງານຄົນຢູ່ພາຍໃນໂຮງງານ;
2. **ອາຄານຜະລິດແບບປິດ** ໝາຍເຖິງ ອາຄານຜະລິດທີ່ມີຝາອ້ອມຮອບອາຄານໂຮງງານ;
3. **ວິຊາການສະເພາະດ້ານ** ໝາຍເຖິງ ຜູ້ທີ່ໄດ້ຮຽນຈົບ ຫຼື ຜ່ານການຝຶກອົບຮົມວິຊາສະເພາະດ້ານໃດໜຶ່ງທີ່ກ່ຽວຂ້ອງກັບກິດຈະການປຸງແຕ່ງໄມ້ ຫຼື ຂະແໜງວິຊາການທີ່ກ່ຽວຂ້ອງ;
4. **ຜູ້ດໍາເນີນທຸລະກິດໄມ້** ໝາຍເຖິງ ເຈົ້າຂອງໂຮງງານປຸງແຕ່ງໄມ້ ແລະ ຜູ້ຄ້າໄມ້ ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້ ຢູ່ ສປປ ລາວ.

## ພາກທີ II
## ປະເພດ ແລະ ຂະໜາດ ໂຮງງານອຸດສາຫະກໍາປຸງແຕ່ງໄມ້

**ມາດຕາ 5 ປະເພດໂຮງງານອຸດສາຫະກໍາປຸງແຕ່ງໄມ້**

ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແບ່ງອອກເປັນ ສີ່ ປະເພດ ດັ່ງນີ້:

1. ໂຮງງານເລື່ອຍໄມ້;
2. ໂຮງງານປຸງແຕ່ງໄມ້;
3. ໂຮງງານເຟີນິເຈີ;
4. ໂຮງເຟີນິເຈີແບບຄອບຄົວ.

**ມາດຕາ 6 ໂຮງງານເລື່ອຍໄມ້**

ໂຮງງານເລື່ອຍໄມ້ ແມ່ນ ໂຮງງານທີ່ນໍາເອົາໄມ້ທ່ອນເຂົ້າມາເລື່ອຍ ເປັນໄມ້ແປຮູບ ສາມາດເປັນວັດຖຸດິບສະໜອງໃຫ້ແກ່ ໂຮງງານປຸງແຕ່ງໄມ້, ໂຮງງານເຟີນິເຈີ ແລະ ໂຮງເຟີນິເຈີແບບຄອບຄົວ.

**ມາດຕາ 7 ໂຮງງານປຸງແຕ່ງໄມ້**

ໂຮງງານປຸງແຕ່ງໄມ້ ແມ່ນ ໂຮງງານທີ່ນໍາເອົາໄມ້ທ່ອນ ຫຼື ໄມ້ແປຮູບ ເຂົ້າມາປຸງແຕ່ງ ໃຫ້ເປັນຜະລິດຕະພັນໄມ້ ເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ຕາມລະບົບການຜະລິດ.

**ມາດຕາ 8 ໂຮງງານເຟີນິເຈີ**

ໂຮງງານເຟີນິເຈີ ແມ່ນ ໂຮງງານທີ່ນໍາເອົາ ໄມ້ທ່ອນທີ່ມີຂະໜາດເໝາະສົມກັບ ໃບເລື່ອຍ ຂອງໂຮງງານ ແລະ ຕໍໄມ້, ປຸດໄມ້, ໄມ້ແປຮູບ, ໄມ້ບາງ (ໄມ້ປອກ, ໄມ້ຝານ) ແລະ ໄມ້ອັດ ເຂົ້າຜ່ານຂະບວນການປຸງແຕ່ງ ໃຫ້ເປັນຜະລິດຕະພັນ ເປັນຕົ້ນ ວົງກົບ, ບານປະຕູ, ບານປ່ອງຢ້ຽມ, ໂຕະ, ຕັ່ງ, ຕູ້, ຕຽງ, ໂຊຟາ, ເຄື່ອງຕົບແຕ່ງ, ເຄື່ອງແກະສະຫຼັກ, ເຄື່ອງປະດັບເອ້, ຂອບຮູບ, ເຄື່ອງໃຊ້ສອຍ ແລະ ເຄື່ອງຫັດຖະກໍາອື່ນ. ດ.ອຸ

**ມາດຕາ 9 ໂຮງເຟີນິເຈີແບບຄອບຄົວ**

ໂຮງເຟີນິເຈີແບບຄອບຄົວ ແມ່ນ ໂຮງງານທີ່ນໍາເອົາ ໄມ້ທ່ອນທີ່ມີຂະໜາດເໝາະສົມກັບ ໃບເລື່ອຍຂອງໂຮງງານ ແລະ ຕໍໄມ້, ປຸດໄມ້, ໄມ້ແປຮູບ ແລະ ໄມ້ອັດ ເຂົ້າຜ່ານຂະບວນການປຸງແຕ່ງ ໃຫ້ເປັນຜະລິດຕະພັນ ເປັນຕົ້ນ ວົງກົບ, ບານປະຕູ, ບານປ່ອງຢ້ຽມ, ໂຕະ, ຕັ່ງ, ຕູ້, ຕຽງ, ໂຊຟາ, ເຄື່ອງຕົບແຕ່ງ, ເຄື່ອງແກະສະຫຼັກ ເຄື່ອງປະດັບເອ້, ຂອບຮູບ, ເຄື່ອງໃຊ້ສອຍ ແລະ ເຄື່ອງຫັດຖະກໍາອື່ນ.

**ມາດຕາ 10 ຂະໜາດຂອງໂຮງງານອຸດສາຫະກໍາປຸງແຕ່ງໄມ້**

ໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແບ່ງອອກເປັນ ສີ່ ຂະໜາດ ໂດຍຂຶ້ນກັບຈໍານວນແຮງງານ ຫຼື ກໍາລັງແຮງລວມຂອງເຄື່ອງຈັກ ທີ່ນໍາໃຊ້ຢູ່ພາຍໃນໂຮງງານ ແລະ ໃຫ້ຖືເອົາຕົວເລກທີ່ຫຼາຍກວ່າ ເປັນການກໍານົດຂະໜາດໂຮງງານ ດັ່ງນີ້:

1. ໂຮງງານຂະໜາດໃຫຍ່ ແມ່ນ ໂຮງງານທີ່ມີຈໍານວນແຮງງານ 201 ຄົນຂຶ້ນໄປ ຫຼື ກໍາລັງແຮງລວມຂອງ ເຄື່ອງຈັກ 201 ແຮງມ້າ ຂຶ້ນໄປ;
2. ໂຮງງານຂະໜາດກາງ ແມ່ນ ໂຮງງານທີ່ມີຈໍານວນແຮງງານ 51 ຫາ 200 ຄົນ ຫຼື ກໍາລັງແຮງລວມຂອງ ເຄື່ອງຈັກ 51 ແຮງມ້າ ຫາ 200 ແຮງມ້າ;
3. ໂຮງງານຂະໜາດນ້ອຍ ແມ່ນ ໂຮງງານທີ່ມີຈໍານວນແຮງງານ 10 ຫາ 50 ຄົນ ຫຼື ກໍາລັງແຮງລວມຂອງ ເຄື່ອງຈັກ 10 ແຮງມ້າ ຫາ 50 ແຮງມ້າ;
4. ໂຮງເຟີນິເຈີແບບຄອບຄົວ ມີຂະໜາດຈຸລະ ແລະ ມີຈໍານວນແຮງງານຕໍ່າກວ່າ 10 ຄົນ ຫຼື ນໍາໃຊ້ເຄື່ອງຈັກທີ່ມີກໍາລັງແຮງລວມຕໍ່າກວ່າ 10 ແຮງມ້າ.

## ພາກທີ III
## ມາດຕະຖານ ໂຮງງານອຸດສາຫະກໍາປຸງແຕ່ງໄມ້
## ໝວດທີ 1
## ມາດຕະຖານ ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນິເຈີ

**ມາດຕາ 11 ມາດຕະຖານ ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນິເຈີ**

ມາດຕະຖານ ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນິເຈີ ແມ່ນການກໍານົດຄຸນລັກສະນະສະເພາະທາງດ້ານມາດຕະຖານເຕັກນິກ ດັ່ງນີ້:

1. ມາດຕະຖານສະຖານທີ່ຕັ້ງ;
2. ມາດຕະຖານອາຄານຜະລິດ ແລະ ສິ່ງປຸກສ້າງ;
3. ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ;
4. ມາດຕະຖານຂະບວນການຜະລິດ;
5. ມາດຕະຖານວິຊາການ ແລະ ກໍາມະກອນ;
6. ມາດຕະຖານຄວາມປອດໄພ;
7. ມາດຕະຖານສຸຂານາໄມ;
8. ມາດຕະຖານສິ່ງແວດລ້ອມ;
9. ມາດຕະຖານການບໍລິຫານ.

**ມາດຕາ 12 ມາດຕະຖານສະຖານທີ່ຕັ້ງ**

ມາດຕະຖານສະຖານທີ່ຕັ້ງ ມີດັ່ງນີ້:

1. ຕັ້ງໃນເຂດອຸດສາຫະກໍາ ຫຼື ນິຄົມອຸດສາຫະກໍາ ມີໄລຍະຫ່າງຈາກ ຊຸມຊົນ, ໂຮງຮຽນ, ໂຮງໝໍ,

ວັດ, ແຫຼ່ງວັດທະນະທຳ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂດອະນຸລັກຊີວະນາໆພັນ, ແຫຼ່ງນ້ຳທຳມະຊາດ ແລະ ອື່ນໆ;
2. ມີເນື້ອທີ່ເໝາະສົມ ກັບການດຳເນີນກິດຈະການ ຕາມປະເພດ ແລະ ຂະໜາດໂຮງງານ;
3. ມີກຳແພງ ຫຼື ຮົ້ວອ້ອມຮອບທີ່ແໜ້ນໜາ ແລະ ມີປະຕູທາງເຂົ້າ-ອອກ ກວ້າງຂວາງດີ;
4. ມີເສັ້ນທາງເຂົ້າ-ອອກ ສະດວກ;
5. ຕ້ອງຕິດປ້າຍໂຮງງານ ໃຫ້ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 13 ມາດຕະຖານ ອາຄານຜະລິດ ແລະ ສິ່ງປຸກສ້າງ**

ມາດຕະຖານ ອາຄານຜະລິດ ແລະ ສິ່ງປຸກສ້າງ ມີດັ່ງນີ້:

1. ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ປະກອບມີ ອາຄານຜະລິດ ແລະ ສິ່ງປຸກສ້າງ ເປັນຕົ້ນ ອາຄານສຳລັບການຜະລິດ, ສາງເກັບມ້ຽນວັດຖຸດິບ, ສາງເກັບມ້ຽນຜະລິດຕະພັນ, ອາຄານສຳລັບການຄຸ້ມຄອງບໍລິຫານ, ອາຄານຫ້ອງອາຫານ, ບ່ອນພັກຜ່ອນ, ບ່ອນຈອດລົດ, ຫ້ອງນ້ຳ, ບ່ອນສູບຢາ, ລະບົບບຳບັດສິ່ງເສດເຫຼືອ ແລະ ອື່ນໆ;
2. ໂຄງສ້າງອາຄານຕ້ອງແໜ້ນໜາ ແລະ ເໝາະສົມກັບການດຳເນີນກິດຈະການ, ແຜນຜັງການກໍ່ສ້າງອາຄານໂຮງງານ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກການກໍ່ສ້າງ ຈາກຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ;
3. ອາຄານຜະລິດແບບປິດ ຕ້ອງມີປະຕູເຂົ້າ-ອອກ ສຸກເສີນຢ່າງໜ້ອຍໜຶ່ງບ່ອນ, ບານປະຕູຕ້ອງເປັນລະບົບເປີດ-ປິດ ໄດ້ງ່າຍ ແລະ ບໍ່ມີສິ່ງກີດຂວາງໃນເວລານຳໃຊ້;
4. ຕ້ອງຕິດຕັ້ງລະບົບໄຟຟ້າທີ່ຮັບປະກັນຄວາມປອດໄພ ເປັນຕົ້ນ ລະບົບໄຟຟ້າເຄື່ອງຈັກ ແລະ ໄຟຟ້າແສງສະຫວ່າງ;
5. ຕ້ອງຕິດຕັ້ງ ພັດລົມ, ລະບົບລະບາຍອາກາດ, ລະບົບດູດຝຸ່ນ ແລະ ອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 14 ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ**

ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ ມີດັ່ງນີ້:

1. ເປັນເຄື່ອງຈັກໃໝ່ ຫຼື ຖ້າເປັນເຄື່ອງຈັກທີ່ໃຊ້ແລ້ວ ຕ້ອງມີຄຸນນະພາບດີ, ເຕັກໂນໂລຊີເໝາະສົມຕາມຍຸກສະໄໝ, ຖືກຕ້ອງກັບເປົ້າໝາຍການນຳໃຊ້, ບໍ່ມີຄວາມສ່ຽງ ຕໍ່ການເກີດຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ ແລະ ສິ່ງແວດລ້ອມ. ໃນນັ້ນ, ຕ້ອງແມ່ນເຄື່ອງຈັກທີ່ ປະຢັດວັດຖຸດິບ, ປະຢັດພະລັງງານ ແລະ ຫຼຸດຜ່ອນການປ່ອຍມົນລະພິດ;
2. ຕິດຕັ້ງເຄື່ອງຈັກໃຫ້ຖືກຕ້ອງຕາມລະບົບມາດຕະຖານເຕັກນິກ ແລະ ຖືກຕາມແຜນຜັງການຕິດຕັ້ງເຄື່ອງຈັກ ແລະ ສາຍງານການຜະລິດ.

**ມາດຕາ 15 ມາດຕະຖານຂະບວນການຜະລິດ**

ມາດຕະຖານຂະບວນການຜະລິດທີ່ເໝາະສົມ ຕ້ອງເລີ່ມແຕ່ການນຳວັດຖຸດິບເຂົ້າຜະລິດ ຈົນຮອດຜະລິດຕະພັນສຸດທ້າຍ, ທຸກສາຍງານການຜະລິດທີ່ມີສິ່ງເສດເຫຼືອ ຕ້ອງຕິດຕັ້ງລະບົບການກຳຈັດ ໃຫ້ໄດ້ມາດຕະຖານ ທີ່ກຳນົດໄວ້.

**ມາດຕາ 16 ມາດຕະຖານ ວິຊາການ ແລະ ກຳມະກອນ**

ມາດຕະຖານ ວິຊາການ ແລະ ກຳມະກອນ ມີດັ່ງນີ້:

1. ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນຮັບຮອງດ້ານເຕັກນິກວິຊາການ ທີ່ກ່ຽວຂ້ອງ ແລະ ມີປະສົບການ ປະຈຳຢູ່ໂຮງງານ ແຕ່ລະດ້ານ ຢ່າງໜ້ອຍໜຶ່ງຄົນ ແລະ ໄດ້ຮັບການຝຶກອົບຮົມ ຍົກລະດັບທາງດ້ານເຕັກນິກວິຊາການ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ;
2. ມີສຸຂະພາບແຂງແຮງດີ ແລະ ໄດ້ຮັບການກວດສຸຂະພາບ ເປັນປົກກະຕິຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.

**ມາດຕາ 17 ມາດຕະຖານຄວາມປອດໄພ**

ມາດຕະຖານຄວາມປອດໄພ ມີດັ່ງນີ້:

1. ໜ່ວຍງານ ຫຼື ຜູ້ຮັບຜິດຊອບຄວາມປອດໄພໃນໂຮງງານ, ພະນັກງານ ແລະ ກຳມະກອນ ຕ້ອງໄດ້ຜ່ານການຝຶກອົບຮົມວຽກງານຄວາມປອດໄພໂຮງງານ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ;
2. ກຳມະກອນ ຕ້ອງໃສ່ເຄື່ອງມືອຸປະກອນປ້ອງກັນແຮງງານ ໂດຍຂຶ້ນກັບຄວາມຈຳເປັນ ຂອງແຕ່ລະໜ້າວຽກ ທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍ ເປັນຕົ້ນ ຊຸດເຄື່ອງນຸ່ງ, ໝວກກັນກະທົບ, ອຸປະກອນ ປິດປາກ-ປິດດັງ ແລະ ປິດຫູ, ຊົບມື, ເກີບກັນກະທົບ, ຊຸດກັນຄວາມຮ້ອນ, ແວ່ນຕາກັນແສງ ແລະ ຈັດໃຫ້ມີບ່ອນເກັບມ້ຽນເຄື່ອງນຸ່ງ;
3. ເຄື່ອງຈັກທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ ຕ້ອງຕິດຕັ້ງຝາຄອບ ຫຼື ຕາໜ່າງເຫຼັກປ້ອງກັນໃສ່ກົງລໍ້ໝູນ, ແຂ້ວເຟືອງ, ສາຍພານ, ສາຍໂສ້, ໃບເລື່ອຍ ແລະ ອື່ນໆ;
4. ສະຖານທີ່ ທີ່ເປັນອັນຕະລາຍ ຫຼື ບ່ອນຄວາມສ່ຽງທີ່ຈະເກີດອຸປະຕິເຫດ ຕ້ອງຕິດຕັ້ງປ້າຍເຕືອນ, ປ້າຍຫ້າມ, ປ້າຍຊີ້ບອກ ແລະ ແຕ້ມເສັ້ນຂອບເຂດຕ່າງໆ;
5. ຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ໃນໂຮງງານໃຫ້ພຽງພໍ ເປັນຕົ້ນ ລະບົບສັນຍານເຕືອນໄພ ແລະ ບັ້ງດັບເພີງ ຫຼື ລະບົບນ້ຳມອດໄຟ ທີ່ສາມາດນຳໃຊ້ໄດ້;
6. ຕິດຕັ້ງລະບົບອຸປະກອນຕັດໄຟຟ້າແບບອັດຕະໂນມັດ ໃສ່ເຄື່ອງຈັກ ແລະ ອາຄານໂຮງງານ.

**ມາດຕາ 18 ມາດຕະຖານສຸຂານາໄມ**

ມາດຕະຖານສຸຂານາໄມ ມີດັ່ງນີ້:

1. ມີຜູ້ຮັບຜິດຊອບວຽກງານສຸຂານາໄມ ຢ່າງໜ້ອຍໜຶ່ງຄົນ;
2. ມີຕູ້ຢາ ແລະ ອຸປະກອນປະຖົມພະຍາບານເບື້ອງຕົ້ນ;
3. ມີນ້ຳດື່ມ ທີ່ສະອາດ ແລະ ມີລະບົບນ້ຳໃຊ້ ຢ່າງພຽງພໍ ເປັນຕົ້ນ ລະບົບນ້ຳປະປາ ຫຼື ນ້ຳບາດານ;
4. ມີຫ້ອງນ້ຳ ທີ່ສະອາດ ໂດຍແຍກຫ້ອງນ້ຳຍິງ ແລະ ຫ້ອງນ້ຳຊາຍ ສະເພາະ ຕາມຄວາມເໝາະສົມ;
5. ມີບ່ອນລ້າງມື, ນ້ຳຢາຂ້າເຊື້ອ ຫຼື ສະບູ ທີ່ຖືກຫຼັກສຸຂານາໄມ ໃຫ້ພຽງພໍ ແລະ ເໝາະສົມ;
6. ປະຕິບັດມາດຕະການ ປ້ອງກັນການແຜ່ລະບາດເຊື້ອພະຍາດ ຢ່າງເຂັ້ມງວດ.

**ມາດຕາ 19 ມາດຕະຖານສິ່ງແວດລ້ອມ**

ມາດຕະຖານສິ່ງແວດລ້ອມ ມີດັ່ງນີ້:

1. ຕ້ອງເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ມີໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;
2. ມີລະບົບບຳບັດ ຫຼື ກຳຈັດສິ່ງເສດເຫຼືອຂອງໂຮງງານ ທີ່ເປັນລະບົບມາດຕະຖານ;
3. ມີນລະພິດ ແລະ ສິ່ງເສດເຫຼືອ ທີ່ຈະປ່ອຍອອກຈາກໂຮງງານ ຕ້ອງຢູ່ໃນເກນຄ່າມາດຕະຖານ ຈຶ່ງສາມາດປ່ອຍອອກຈາກໂຮງງານໄດ້.

**ມາດຕາ 20 ມາດຕະຖານການບໍລິຫານ**

ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງມີແຜນການບໍລິຫານໂຮງງານ, ການຄຸ້ມຄອງການຜະລິດ ໂດຍຜ່ານການຢັ້ງຢືນຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ປະຕິບັດໃຫ້ໄດ້ມາດຕະຖານພາຍໃນ ຫຼື ສາກົນໃດໜຶ່ງ ໂດຍຜ່ານການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ, ມີລະບົບການຄຸ້ມຄອງໄມ້ ສົ້ນເຂົ້າ ແລະ ສົ້ນອອກ.

ໂຮງງານອຸດສາຫະກຳປຸງແຕ່ງໄມ້ ສາມາດອອກແບບຜະລິດຕະພັນ, ສ້າງຍີ່ຫໍ້, ເຄື່ອງໝາຍການຄ້າ ແລະ ຈົດທະບຽນເຄື່ອງໝາຍການຄ້າ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ. ພ.ອນ

## ໝວດທີ 2
## ມາດຕະຖານ ໂຮງເຟີນິເຈີແບບຄອບຄົວ

**ມາດຕາ 21 ມາດຕະຖານໂຮງເຟີນິເຈີແບບຄອບຄົວ**

ໂຮງເຟີນິເຈີແບບຄອບຄົວ ມີມາດຕະຖານ ດັ່ງນີ້:

1. ມາດຕະຖານສະຖານທີ່ຕັ້ງ;
2. ມາດຕະຖານອາຄານຜະລິດ;
3. ມາດຕະຖານເຄື່ອງຈັກ;
4. ມາດຕະຖານຄວາມປອດໄພ ແລະ ສຸຂານາໄມ;
5. ມາດຕະຖານສິ່ງແວດລ້ອມ.

**ມາດຕາ 22 ມາດຕະຖານສະຖານທີ່ຕັ້ງ**

ມາດຕະຖານສະຖານທີ່ຕັ້ງ ມີດັ່ງນີ້:

1. ມີໄລຍະຫ່າງຈາກ ໂຮງຮຽນ, ໂຮງໝໍ, ວັດ ແລະ ອື່ນໆ;
2. ມີເນື້ອທີ່ເໝາະສົມ ກັບການດຳເນີນກິດຈະການ;
3. ມີກຳແພງ ຫຼື ຮົ້ວອ້ອມຮອບທີ່ແໜ້ນໜາ ແລະ ມີປະຕູທາງເຂົ້າ-ອອກ ກວ້າງຂວາງດີ;
4. ມີເສັ້ນທາງເຂົ້າ-ອອກ ສະດວກ;
5. ຕິດປ້າຍໂຮງງານ ໃຫ້ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 23 ມາດຕະຖານອາຄານຜະລິດ**

ມາດຕະຖານອາຄານຜະລິດ ມີດັ່ງນີ້:

1. ໂຄງສ້າງອາຄານຕ້ອງແໜ້ນໜາ ແລະ ເໝາະສົມກັບການດຳເນີນກິດຈະການ;
2. ຕິດຕັ້ງລະບົບໄຟຟ້າທີ່ຮັບປະກັນຄວາມປອດໄພ ເປັນຕົ້ນ ລະບົບໄຟຟ້າເຄື່ອງຈັກ ແລະ ໄຟຟ້າແສງສະຫວ່າງ;
3. ມີລະບົບລະບາຍອາກາດ.

**ມາດຕາ 24 ມາດຕະຖານເຄື່ອງຈັກ**

ມາດຕະຖານເຄື່ອງຈັກ ທີ່ຕິດຕັ້ງຢູ່ໃນໂຮງເຟີນິເຈີແບບຄອບຄົວ ຕ້ອງເປັນເຄື່ອງຈັກໃໝ່ ຫຼື ຖ້າເປັນເຄື່ອງຈັກທີ່ໃຊ້ແລ້ວ ຕ້ອງມີຄຸນນະພາບດີ, ຖືກຕ້ອງກັບເປົ້າໝາຍການນຳໃຊ້ ເປັນຕົ້ນ ເຄື່ອງຈັກຕັດໄມ້, ເຄື່ອງຈັກຊອຍໄມ້ (ມີແຕ່ເລື່ອຍວົງເດືອນເທົ່ານັ້ນ ທີ່ມີໃບເລື່ອຍ ຂະໜາດເສັ້ນຜ່າກາງ 30 ຊັງຕີແມັດ), ເຄື່ອງຈັກເຈາະໄມ້, ເຄື່ອງຈັກກົບໄມ້, ເຄື່ອງຈັກໂຮເຕີ, ເຄື່ອງຈັກຈິກຊໍ, ເຄື່ອງຈັກຂັດ, ເຄື່ອງຈັກແກະສະຫຼັກ ແລະ ເຄື່ອງຈັກອື່ນ.

**ມາດຕາ 25 ມາດຕະຖານຄວາມປອດໄພ ແລະ ສຸຂານາໄມ**

ມາດຕະຖານຄວາມປອດໄພ ແລະ ສຸຂານາໄມ ມີດັ່ງນີ້:

1. ນາຍຊ່າງ ຕ້ອງໃສ່ເຄື່ອງມືອຸປະກອນປ້ອງກັນແຮງງານ ໂດຍຂຶ້ນກັບຄວາມຈຳເປັນ ຂອງແຕ່ລະໜ້າວຽກທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍ ເປັນຕົ້ນ ຊຸດເຄື່ອງນຸ່ງ, ໝວກກັນກະທົບ, ອຸປະກອນ ປິດປາກ-ປິດດັງ ແລະ ປິດຫູ, ຖົງມື, ເກີບກັນກະທົບ, ຊຸດກັນຄວາມຮ້ອນ, ແວ່ນຕາກັນແສງ ແລະ ຈັດໃຫ້ມີບ່ອນເກັບມ້ຽນເຄື່ອງນຸ່ງ;
2. ເຄື່ອງຈັກທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ ຕ້ອງຕິດຕັ້ງຝາຄອບ ຫຼື ຕາໜ່າງເຫຼັກປ້ອງກັນໃສ່ກົງລໍ້ໝູນ, ແຂ້ວເຟືອງ, ສາຍພານ, ສາຍໂສ້, ໃບເລື່ອຍ ແລະ ອື່ນໆ; ໑-໑໔

3. ມີບັ້ງດັບເພີງ ຫຼື ລະບົບນໍ້າມອດໄຟ ທີ່ສາມາດນໍາໃຊ້ໄດ້;
4. ຕິດຕັ້ງລະບົບອຸປະກອນຕັດໄຟຟ້າແບບອັດຕະໂນມັດ ໃສ່ເຄື່ອງຈັກ ແລະ ອາຄານໂຮງງານ;
5. ມີຕູ້ຢາປະຈໍາບ້ານ, ຫ້ອງນໍ້າທີ່ສະອາດ ແລະ ອື່ນໆ.

**ມາດຕາ 26 ມາດຕະຖານສິ່ງແວດລ້ອມ**

ມາດຕະຖານສິ່ງແວດລ້ອມໂຮງເຟີນີເຈີແບບຄອບຄົວ ຕ້ອງມີມາດຕະການປ້ອງກັນ ບໍ່ໃຫ້ສິ່ງຜົນກະທົບຕໍ່ ຊຸມຊົນ ແລະ ສິ່ງແວດລ້ອມ ເປັນຕົ້ນ ສຽງດັງ, ກິ່ນຂີ້, ຝຸ່ນ ແລະ ໃຫ້ກໍາຈັດສິ່ງເສດເຫຼືອ ປະເພດຂີ້ເລື່ອຍ, ເສດໄມ້ ແລະ ຂີ້ກົບ ເປັນປົກກະຕິ.

## ພາກທີ IV
## ການສ້າງຕັ້ງ ແລະ ດໍາເນີນກິດຈະການ ໂຮງງານອຸດສາຫະກໍາປຸງແຕ່ງໄມ້
## ໝວດທີ 1
## ການສ້າງຕັ້ງ ໂຮງງານອຸດສາຫະກໍາປຸງແຕ່ງໄມ້

**ມາດຕາ 27 ການສະເໜີສ້າງຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້ ຕ້ອງສະເໜີເຈດຈໍານົງ ຫາຂະແໜງການກະສິກໍາ ແລະ ປ່າໄມ້ ເພື່ອຄົ້ນຄວ້າເຫັນດີທາງດ້ານຫຼັກການ ຕາມການແບ່ງຂັ້ນຄຸ້ມຄອງ. ຫຼັງຈາກນັ້ນ, ຈຶ່ງສາມາດດໍາເນີນ ການຂໍອະນຸຍາດອອກ ໃບທະບຽນວິສາຫະກິດ ຈາກຂະແໜງການອຸດສາຫະກໍາ ແລະ ການຄ້າ, ໃບຢັ້ງຢືນກ່ຽວກັບບົດວິພາກເສດຖະກິດ-ເຕັກນິກ ຈາກຂະແໜງການກະສິກໍາ ແລະ ປ່າໄມ້, ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຈາກຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ໃບອະນຸຍາດປຸກສ້າງໂຮງງານ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 28 ເງື່ອນໄຂໃນການສ້າງຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສ້າງຕັ້ງໂຮງງານ ຕ້ອງມີເງື່ອນໄຂ ດັ່ງນີ້:
1. ເປັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຕ້ອງຕາມກົດໝາຍ ວ່າດ້ວຍວິສາຫະກິດ;
2. ມີ ທຶນ, ເຄື່ອງຈັກ, ວັດຖຸປະກອນ ແລະ ພາຫະນະຮັບໃຊ້;
3. ມີວິຊາການ ທີ່ມີຄຸນວຸດທິການສຶກສາ, ເຄີຍຜ່ານງານ ແລະ ມີປະສົບການ ທີ່ກ່ຽວຂ້ອງກັບອຸດສາຫະກໍາປຸງແຕ່ງໄມ້;
4. ມີພື້ນທີ່ສ້າງຕັ້ງໂຮງງານ ແລະ ພື້ນທີ່ການຜະລິດ;
5. ຮັບປະກັນ ໃຫ້ມີແຫຼ່ງວັດຖຸດິບ ທີ່ພຽງພໍ ແລະ ຖືກຕ້ອງຕາມກົດໝາຍ, ມີປ່າປູກເປັນຂອງຕົນເອງ ໂດຍບໍ່ເອື່ອຍອີງໃສ່ ວັດຖຸດິບຈາກປ່າທໍາມະຊາດ;
6. ມີເງື່ອນໄຂອື່ນ ກ່ຽວກັບ ການດໍາເນີນກິດຈະການສ້າງຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້.

**ມາດຕາ 29 ເອກະສານ ຂໍອະນຸຍາດສ້າງຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້**

1. **ການປະກອບເອກະສານ ຂໍອະນຸຍາດສ້າງຕັ້ງໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ທຸກຂະໜາດປະກອບມີ ດັ່ງນີ້:**
   1) ໃບຄໍາຮ້ອງ ຂໍອະນຸຍາດສ້າງຕັ້ງໂຮງງານ ຕາມແບບພິມ ຮຸ່ນ 1 ໃນເອກະສານຊ້ອນທ້າຍຂອງຂໍ້ຕົກລົງສະບັບນີ້;
   2) ສໍາເນົາ ໃບຢັ້ງຢືນ ກ່ຽວກັບ ບົດວິພາກເສດຖະກິດ-ເຕັກນິກໂຮງງານ;
   3) ສໍາເນົາ ໃບທະບຽນວິສາຫະກິດ;
   4) ສໍາເນົາ ໃບຢັ້ງຢືນການມອບອາກອນ; ຂ.ວ

5) ສຳເນົາ ໃບອະນຸຍາດລົງທຶນ ໃນກໍລະນີເປັນກິດຈະການສຳປະທານ;
6) ສຳເນົາ ໃບຢັ້ງຢືນການເຄື່ອນໄຫວທາງດ້ານການເງິນ;
7) ສຳເນົາ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມໂຮງງານ;
8) ສຳເນົາ ໃບສັນຍາເຊົ່າທີ່ດິນ/ອາຄານ, ໃບມອບກຳມະສິດທີ່ດິນ ຫຼື ໃບຕາດິນ;
9) ສຳເນົາ ໃບອະນຸຍາດປຸກສ້າງ.

**2. ການປະກອບເອກະສານ ຂໍອະນຸຍາດສ້າງຕັ້ງໂຮງເຟີນີເຈີແບບຄອບຄົວ ມີດັ່ງນີ້:**

1) ໃບຄຳຮ້ອງ ຂໍອະນຸຍາດສ້າງຕັ້ງໂຮງເຟີນີເຈີແບບຄອບຄົວ ຕາມແບບພິມ ຮຈຄ 2 ໃນເອກະສານຊ້ອນທ້າຍຂອງຂໍ້ຕົກລົງສະບັບນີ້;
2) ສຳເນົາ ໃບທະບຽນວິສາຫະກິດ;
3) ສຳເນົາ ໃບຢັ້ງຢືນການມອບອາກອນ;
4) ສຳເນົາ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ;
5) ສຳເນົາ ໃບອະນຸຍາດປຸກສ້າງ.

**ມາດຕາ 30 ບົດວິພາກເສດຖະກິດ-ເຕັກນິກໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການສ້າງບົດວິພາກເສດຖະກິດ-ເຕັກນິກ ສຳລັບໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ຕ້ອງປະກອບເນື້ອໃນ ດັ່ງນີ້:

**1. ສະພາບລວມໂຄງການ**

1) ທີ່ຕັ້ງຂອງໂຄງການ;
2) ເຫດຜົນການສະເໜີໂຄງການ;
3) ຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ.

**2. ເຕັກນິກການກໍ່ສ້າງໂຮງງານ**

1) ສະຖານທີ່ສ້າງຕັ້ງໂຮງງານ;
2) ແຜນການປຸກສ້າງອາຄານໂຮງງານ ແລະ ອາຄານອື່ນ;
3) ແຜນການນຳໃຊ້ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການຜະລິດ;
4) ແຫຼ່ງ ແລະ ແຜນການນຳໃຊ້ ວັດຖຸດິບ;
5) ແຜນວາດຂະບວນການຜະລິດ ແລະ ບົດອະທິບາຍ;
6) ການຄຸ້ມຄອງດ້ານສິ່ງແວດລ້ອມ;
7) ຄວາມປອດໄພ ແລະ ສຸຂານາໄມ ໃນໂຮງງານ;
8) ສະຫວັດດີການໂຮງງານ;
9) ສຳເນົາ ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
10) ແຜນງົບປະມານ ເພື່ອອຳນວຍຄວາມສະດວກ ໃຫ້ພາກລັດ ຈັດຕັ້ງປະຕິບັດວຽກງານຊຸກຍູ້ ຕິດຕາມ ແລະ ກວດກາ.

**3. ພາກເສດຖະກິດ**

1) ຕົ້ນທຶນການຜະລິດ;
2) ຄາດຄະເນລາຍຮັບ, ລາຍຈ່າຍ ແລະ ກຳໄລ;
3) ແຜນການຜະລິດ ແລະ ຈຳໜ່າຍ;
4) ແຜນການນຳໃຊ້ແຮງງານ.

**4. ຄາດຄະເນຜົນໄດ້ຮັບຈາກໂຄງການ**

1) ປະສິດທິຜົນການລົງທຶນ (ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຊີວະນາໆພັນ);
2) ການວິເຄາະຄວາມສ່ຽງ ໃນການດຳເນີນກິດຈະການ ຂອງ ໂຮງງານເລື່ອຍໄມ້, ຫຼື ໂຮງງານປຸງແຕ່ງໄມ້, ຫຼື ໂຮງງານເຟີນີເຈີ. ຂ.ວ

**ມາດຕາ 31 ຂັ້ນຕອນການສ້າງຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້**

ພາຍຫຼັງທີ່ໄດ້ປະກອບເອກະສານຄົບຊຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້, ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກວດກາເນື້ອໃນ ບົດວິພາກເສດຖະກິດ-ເຕັກນິກໂຮງງານ;
2. ປະສານກັບຂະແໜງການທີ່ກ່ຽວຂ້ອງ ກວດກາສະຖານທີ່ຕັ້ງໂຮງງານ;
3. ພິຈາລະນາການອອກ ຂໍ້ຕົກລົງວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານ;
4. ດໍາເນີນການກໍ່ສ້າງໂຮງງານ;
5. ຊຸກຍູ້, ສົ່ງເສີມ, ຕິດຕາມ ແລະ ກວດກາ ການສ້າງຕັ້ງໂຮງງານ.

**ມາດຕາ 32 ການກວດກາສະຖານທີ່ຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້**

**1. ໂຮງງານຂະໜາດໃຫຍ່**

ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາສະຖານທີ່ຕັ້ງໂຮງງານ ຊຶ່ງການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີຜູ້ຕາງໜ້າ ຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1) ກົມປ່າໄມ້;
2) ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3) ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
4) ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
5) ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
6) ອົງການປົກຄອງບ້ານ ບ່ອນທີ່ໂຮງງານຕັ້ງຢູ່.

ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ໂດຍກຳນົດແຈ້ງ ຈຸດທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານ ຕາມມາດຕະຖານໂຮງງານທີ່ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

**2. ໂຮງງານຂະໜາດກາງ ແລະ ຂະໜາດນ້ອຍ**

ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາສະຖານທີ່ຕັ້ງໂຮງງານ ຊຶ່ງການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີຜູ້ຕາງໜ້າ ຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1) ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
2) ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
3) ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
4) ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
5) ອົງການປົກຄອງບ້ານ ບ່ອນທີ່ໂຮງງານຕັ້ງຢູ່.

ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ໂດຍກຳນົດແຈ້ງ ຈຸດທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານ ຕາມມາດຕະຖານໂຮງງານທີ່ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

**3. ໂຮງເຟີນິເຈີແບບຄອບຄົວ**

ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາສະຖານທີ່ຕັ້ງໂຮງງານ ຊຶ່ງການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີຜູ້ຕາງໜ້າ ຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1) ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
2) ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ; ຜ.ອຫ

3) ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;

4) ອົງການປົກຄອງບ້ານ ບ່ອນທີ່ໂຮງງານຕັ້ງຢູ່.

ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ໂດຍກຳນົດແຈ້ງ ຈຸດທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານ ຕາມມາດຕະຖານໂຮງງານທີ່ກຳນົດໄວ້ໃນມາດຕາ 21 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 33 ການພິຈາລະນາ ອອກຂໍ້ຕົກລົງອະນຸຍາດສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງໄມ້**

ພາຍຫຼັງສຳເລັດ ການກວດກາສະຖານທີ່ຕັ້ງໂຮງງານ ແລະ ມີບົດບັນທຶກການກວດກາໂຮງງານ ທີ່ເຫັນດີໃຫ້ດຳເນີນການສ້າງຕັ້ງໂຮງງານ. ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານ ພາຍໃນ ສິບ ວັນ ລັດຖະການ ນັບແຕ່ມື້ເຊັນບົດບັນທຶກ ການກວດກາໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານ ຂະໜາດໃຫຍ່;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານ ຂະໜາດກາງ ແລະ ຂະໜາດນ້ອຍ ບົນພື້ນຖານການເຫັນດີຂອງ ເຈົ້າແຂວງ/ເຈົ້າຄອງນະຄອນຫຼວງວຽງຈັນ;
3. ຫ້ອງກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງເຟີນິເຈີແບບຄອບຄົວ ບົນພື້ນຖານການເຫັນດີຂອງ ເຈົ້າເມືອງ/ເຈົ້ານະຄອນ.

## ໝວດທີ 2
## ການດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້

**ມາດຕາ 34 ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ແມ່ນ ການເຄື່ອນໄຫວດຳເນີນກິດຈະການໂຮງງານໃຫ້ຖືກຕ້ອງ ຕາມມາດຕະຖານເຕັກນິກໂຮງງານອຸດສາຫະກຳປຸງແຕ່ງໄມ້ ໂດຍຜ່ານການຄົ້ນຄວ້າ, ກວດກາ ແລະ ພິຈາລະນາ ອອກໃບຢັ້ງຢືນ ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ຕາມແບບພິມ ຮຽມ 3.

**ມາດຕາ 35 ເງື່ອນໄຂການຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ສຳເລັດການກໍ່ສ້າງໂຮງງານອຸດສາຫະກຳປຸງແຕ່ງໄມ້;
2. ຜ່ານການຜະລິດທົດລອງ.

ການສຳເລັດການກໍ່ສ້າງໂຮງງານອຸດສາຫະກຳປຸງແຕ່ງໄມ້ ແມ່ນຜົນສຳເລັດ ຂອງການກໍ່ສ້າງອາຄານໂຮງງານ, ຕິດຕັ້ງເຄື່ອງຈັກ, ຕິດຕັ້ງລະບົບປ້ອງກັນຄວາມປອດໄພ, ສຸຂານາໄມ, ລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆພາຍໃນໂຮງງານ ສຳເລັດເປັນທີ່ຮຽບຮ້ອຍ ໂດຍຖືກຕ້ອງຕາມແຜນຜັງເຕັກນິກການກໍ່ສ້າງ ແລະ ຕາມທີ່ສະເໜີໄວ້ໃນບົດວິພາກເສດຖະກິດ-ເຕັກນິກໂຮງງານ.

ການຜະລິດທົດລອງ ແມ່ນຂະບວນການຜະລິດ ແລະ ປຸງແຕ່ງ ເພື່ອກວດສອບຄວາມພ້ອມ ຕາມມາດຕະຖານເຕັກນິກປະສິດທິພາບຂອງໂຮງງານ ແລະ ຄຸນນະພາບຂອງສິນຄ້າ ລວມທັງ ລະບົບຄວາມປອດໄພ, ລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆ ພາຍໃນໂຮງງານ. ໓.໑໒

ການຜະລິດທົດລອງ ໃຊ້ເວລາສູງສຸດບໍ່ເກີນ ເກົ້າສິບ ວັນ ກ່ອນການສະເໜີຂໍໃບຢັ້ງຢືນການດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້. ໃນໄລຍະການຜະລິດທົດລອງ ບໍ່ອະນຸຍາດໃຫ້ຈໍາໜ່າຍ, ແຈກຢາຍ ຫຼື ຂາຍ ຜະລິດຕະພັນຂອງໂຮງງານ.

**ມາດຕາ 36 ການປະກອບເອກະສານ ສະເໜີຂໍໃບຢັ້ງຢືນການດໍາເນີນກິດຈະການໂຮງງານປຸງແຕ່ງໄມ້**

1. **ການປະກອບເອກະສານ ຂໍໃບຢັ້ງຢືນ ການດໍາເນີນກິດຈະການ ໂຮງງານປຸງແຕ່ງໄມ້ ຂະໜາດໃຫຍ່, ກາງ ແລະ ນ້ອຍ ຕ້ອງປະກອບມີ ດັ່ງນີ້:**
   1) ໃບຄໍາຮ້ອງ ຂໍດໍາເນີນກິດຈະການໂຮງງານ ຕາມແບບພິມ ຮງມ 3 ໃນເອກະສານຊ້ອນທ້າຍຂອງຂໍ້ຕົກລົງສະບັບນີ້;
   2) ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານອຸດສາຫະກໍາປຸງແຕ່ງໄມ້;
   3) ໃບມອບສິດ ໃນກໍລະນີໃຫ້ບຸກຄົນອື່ນມາພົວພັນແທນ;
   4) ແຜນວາດຂະບວນການຜະລິດ, ພ້ອມທັງບົດອະທິບາຍ;
   5) ລາຍການເຄື່ອງຈັກໃນໂຮງງານ;
   6) ແຜນການເຄື່ອນໄຫວປະຈໍາປີຂອງໂຮງງານ;
   7) ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
   8) ຮູບຖ່າຍຂະໜາດ 3x4 ຊັງຕີແມັດ ຈໍານວນ ສີ່ ໃບ, ຮູບຖ່າຍຕ້ອງບໍ່ເກີນ ສາມ ເດືອນ;
   9) ສໍາເນົາ ໃບທະບຽນວິສາຫະກິດ;
   10) ສໍາເນົາ ໃບຢັ້ງຢືນ ການມອບອາກອນ;
   11) ສໍາເນົາ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ;
   12) ສໍາເນົາ ໃບອະນຸຍາດປຸກສ້າງ;
   13) ສໍາເນົາ ບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໜັງສືຜ່ານແດນ (Passport);
   14) ສໍາເນົາ ໃບຕາດິນ ຫຼື ສັນຍາເຊົ່າ ຫຼື ສໍາປະທານ;
   15) ສໍາເນົາ ໃບຢັ້ງຢືນແຜນການຕິດຕັ້ງລະບົບບໍາບັດ ຫຼື ໃບຢັ້ງຢືນການປ່ອຍສິ່ງເສດເຫຼືອອອກຈາກໂຮງງານປຸງແຕ່ງໄມ້ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ.
2. **ການປະກອບເອກະສານ ຂໍໃບຢັ້ງຢືນການດໍາເນີນກິດຈະການ ໂຮງເຟີນີເຈີແບບຄອບຄົວ ຕ້ອງປະກອບມີ ດັ່ງນີ້:**
   1) ໃບຄໍາຮ້ອງ ຂໍດໍາເນີນກິດຈະການໂຮງງານ ຕາມແບບພິມ ຮຈຄ 4 ໃນເອກະສານຊ້ອນທ້າຍຂອງຂໍ້ຕົກລົງສະບັບນີ້;
   2) ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງເຟີນີເຈີແບບຄອບຄົວ;
   3) ໃບມອບສິດ ໃນກໍລະນີໃຫ້ບຸກຄົນອື່ນມາພົວພັນແທນ;
   4) ຮູບຖ່າຍຂະໜາດ 3x4 ຊັງຕີແມັດ ຈໍານວນ ສີ່ ໃບ, ຮູບຖ່າຍຕ້ອງບໍ່ເກີນ ສາມ ເດືອນ;
   5) ສໍາເນົາ ບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໜັງສືຜ່ານແດນ (Passport);
   6) ບົດສະເໜີ ກ່ຽວກັບ ການດໍາເນີນທຸລະກິດ ໂດຍຫຍໍ້;
   7) ລາຍການເຄື່ອງຈັກໃນໂຮງງານ;
   8) ສໍາເນົາ ໃບຢັ້ງຢືນ ການມອບອາກອນ;
   9) ສໍາເນົາ ໃບອະນຸຍາດປຸກສ້າງ.

**ມາດຕາ 37 ການຄົ້ນຄວ້າເອກະສານການດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້**

ພາຍຫຼັງ ໄດ້ຮັບເອກະສານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 36 ຂອງຂໍ້ຕົກລົງສະບັບນີ້, ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງຊຸດເອກະສານທັນທີ ໂດຍແຈ້ງໃຫ້ຜູ້ສະເໜີຮັບຊາບ ຢ່າງເປັນລາຍລັກອັກສອນ (ກໍານົດ ຫ້າ ວັນ ລັດຖະການ). ຂ.ໜ

**ມາດຕາ 38 ການລົງກວດກາ ແລະ ປະເມີນ ໂຮງງານ ເພື່ອພິຈາລະນາ ອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງຂໍ້ຕົກລົງສະບັບນີ້ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະກຳມະການ ເພື່ອລົງກວດກາໂຮງງານ ຕາມມາດຕະຖານເຕັກນິກໂຮງງານ ແລະ ບົດວິພາກເສດຖະກິດ-ເຕັກນິກໂຮງງານ ພ້ອມທັງເຮັດບົດບັນທຶກຜົນຂອງການລົງກວດກາ.

ຜ່ານການກວດກາ ຫາກເຫັນວ່າ ຍັງບໍ່ສາມາດໃຫ້ດຳເນີນການຜະລິດໄດ້ ຍ້ອນວ່າຍັງບໍ່ທັນຮັບປະກັນດ້ານມາດຕະຖານເຕັກນິກ ສ່ວນໃດໜຶ່ງຂອງໂຮງງານ ແລະ ຍັງບໍ່ທັນໄດ້ປະຕິບັດຕາມບົດວິພາກເສດຖະກິດ-ເຕັກນິກໂຮງງານ ຄະນະກຳມະການກວດກາ ຕ້ອງໃຫ້ຄຳແນະນຳ ເພື່ອປັບປຸງ ແລະ ແກ້ໄຂພາຍໃນເວລາທີ່ກຳນົດໄວ້ ພ້ອມທັງເຮັດບົດບັນທຶກຜົນຂອງການລົງກວດກາ ແລະ ລົງລາຍເຊັນຈາກຄະນະກຳມະການກວດກາ ແລະ ເຈົ້າຂອງໂຮງງານ.

ພາຍຫຼັງເຈົ້າຂອງໂຮງງານ ໄດ້ປັບປຸງຕາມຄຳແນະນຳໃນບົດບັນທຶກແລ້ວ ໃຫ້ສະເໜີຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອກວດກາຄືນ ແລະ ເຮັດບົດບັນທຶກຜົນການປັບປຸງໂຮງງານ. ໃນກໍລະນີ ບໍ່ສາມາດປັບປຸງທັນຕາມກຳນົດເວລາ ຕ້ອງແຈ້ງເຫດຜົນຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຊາບພາຍໃນ ຫ້າ ວັນລັດຖະການ ນັບແຕ່ມື້ໝົດກຳນົດເວລາ ໃນບົດບັນທຶກຜົນຂອງການລົງກວດກາ.

**ມາດຕາ 39 ການພິຈາລະນາ ແລະ ການອອກໃບຢັ້ງຢືນ ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ, ຖືກຕ້ອງ, ໄດ້ກວດກາໂຮງງານ ແລະ ມີບົດບັນທຶກຜົນຂອງການລົງກວດກາ, ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ພາຍໃນ ຫ້າ ວັນ ລັດຖະການ ຕາມແບບພິມ ຮຽມ 4 ໃນເອກະສານຊ້ອນທ້າຍຂອງຂໍ້ຕົກລົງສະບັບນີ້ ພ້ອມທັງຈໍ້າກາໃສ່ເອກະສານທັງໝົດ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ຢ່າງເປັນລະບົບຕໍ່ເນື່ອງ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ກົມປ່າໄມ້ ເປັນຜູ້ອອກ ໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດໃຫຍ່;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນຜູ້ອອກ ໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດກາງ ແລະ ຂະໜາດນ້ອຍ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນຜູ້ອອກ ໃບຢັ້ງຢືນການດຳເນີນກິດຈະການ ໂຮງເຟີນິເຈີແບບຄອບຄົວ.

ໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີອາຍຸ ສອງ ປີ ແລະ ສາມາດຕໍ່ໄດ້. ໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງສະແດງໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ ພາຍໃນໂຮງງານ ຫຼື ບໍລິສັດຂອງຕົນ.

**ມາດຕາ 40 ການຕໍ່ອາຍຸໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການຕໍ່ອາຍຸໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຜູ້ດຳເນີນກິດຈະການ ຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸໃບຢັ້ງຢືນ ກັບຂະແໜງການກະສິກຳ ແລະ ປ່າໄມ້ ກ່ອນໃບຢັ້ງຢືນຈະໝົດອາຍຸຢ່າງໜ້ອຍ ສາມສິບ ວັນ ຕາມແບບພິມ ຮຽມ 1 ໃນເອກະສານຊ້ອນທ້າຍ ຂອງຂໍ້ຕົກລົງສະບັບນີ້, ພ້ອມທັງບົດລາຍງານສະພາບການດຳເນີນກິດຈະການໂຮງງານໄລຍະຜ່ານມາ ແລະ ເອກະສານກ່ຽວຂ້ອງ; ໑.໙

2. ຂັ້ນຕອນການພິຈາລະນາ ຕໍ່ອາຍຸ ໃບຢັ້ງຢືນການດຳເນີນກິດຈະການໂຮງງານ ໃຫ້ປະຕິບັດຄືກັນກັບມາດຕາ 36, 37 ແລະ ລົງກວດກາເບິ່ງພື້ນທີ່ຂອງໂຮງງານຕົວຈິງ, ພ້ອມທັງເຮັດບົດບັນທຶກຜົນຂອງການລົງກວດກາ, ພາຍຫຼັງໄດ້ປະຕິບັດຄົບຖ້ວນ ຕາມຂັ້ນຕອນແລ້ວ ຕ້ອງຕໍ່ໃບຢັ້ງຢືນດຳເນີນກິດຈະ ການໂຮງງານ ຕາມແບບພິມ ຮຽມ 4.

ການຕໍ່ອາຍຸໃບຢັ້ງຢືນການດຳເນີນກິດຈະການໂຮງງານ ມີອາຍຸ ສອງ ປີ, ຍົກເວັ້ນໃນກໍລະນີ ມີການເຊົ່າທີ່ດິນປຸກສ້າງໂຮງງານ ແມ່ນໃຫ້ຕໍ່ໃບອະນຸຍາດ ຕາມກຳນົດເວລາທີ່ຍັງເຫຼືອໃນສັນຍາເຊົ່າທີ່ດິນ.

**ມາດຕາ 41 ການໂຈະ ແລະ ຍຸບເລີກ ໃບຢັ້ງຢືນ ກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຈະຖືກໂຈະ ແລະ ຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດຳເນີນກິດຈະການໂຮງງານ;
2. ດຳເນີນທຸລະກິດບໍ່ຖືກຕ້ອງ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ມີອຸປະຕິເຫດເກີດຂຶ້ນພາຍໃນໂຮງງານ ແລະ ເຈົ້າໜ້າທີ່ ໄດ້ເຂົ້າກວດກາໂຮງງານ ແລະ ເຄື່ອງຈັກແລ້ວເຫັນວ່າ ໂຮງງານ ບໍ່ສາມາດສ້ອມແປງໃຫ້ຢູ່ໃນສະພາບທີ່ໃຊ້ການໄດ້ ແລະ ບໍ່ມີຄວາມປອດໄພຕໍ່ຜູ້ອອກແຮງງານ;
4. ມີການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ການໂຈະໃບຢັ້ງຢືນການດຳເນີນກິດຈະການໂຮງງານ ແມ່ນເພື່ອໃຫ້ຜູ້ດຳເນີນກິດຈະການ ປັບປຸງ, ແກ້ໄຂ ໃນເວລາໃດໜຶ່ງທີ່ແນ່ນອນ ໂດຍຂະແໜງການກະສິກຳ ແລະ ປ່າໄມ້ ເປັນຜູ້ແຈ້ງຕໍ່ຜູ້ດຳເນີນກິດຈະການໂຮງງານຊາບ.

ໃນກໍລະນີ ຜູ້ດຳເນີນກິດຈະການໂຮງງານ ບໍ່ປະຕິບັດຕາມ ການແຈ້ງ ຫຼື ສະເໜີ ຂອງຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການກະສິກຳ ແລະ ປ່າໄມ້ ມີສິດຍຸບເລີກ ໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 42 ການຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານຄືນໃໝ່**

ໃນກໍລະນີໃບຢັ້ງຢືນການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ເສຍຫາຍ ຫຼື ຖືກທຳລາຍ ຜູ້ດຳເນີນກິດຈະການໂຮງງານຕ້ອງແຈ້ງຕໍ່ອົງການປົກຄອງທ້ອງຖິ່ນ ຕາມລະບຽບການ ພ້ອມທັງຍື່ນຄຳຮ້ອງຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນ ສິບຫ້າ ວັນ ລັດຖະການ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນແຈ້ງເສຍຫາຍຈາກອົງການປົກຄອງທ້ອງຖິ່ນ ເພື່ອສະເໜີອອກໃບຢັ້ງຢືນຄືນໃໝ່.

**ມາດຕາ 43 ຄ່າທຳນຽມ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ**

ຄ່າທຳນຽມ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ, ຕໍ່ອາຍຸດຳເນີນກິດຈະການ, ຂະຫຍາຍໂຮງງານ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານຄືນໃໝ່ ໃຫ້ປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ແຕ່ລະໄລຍະ.

## ພາກທີ V
## ກິດຈະກຳ ການຄຸ້ມຄອງ ໂຮງງານອຸດສາຫະກຳປຸງແຕ່ງໄມ້

**ມາດຕາ 44 ກິດຈະກຳ ການຄຸ້ມຄອງໂຮງງານ**

ກິດຈະກຳ ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ປະກອບມີ ດັ່ງນີ້:

1. ການສ້າງແຜນການເຄື່ອນໄຫວຂອງໂຮງງານ;
2. ການຄຸ້ມຄອງສະຖານທີ່, ອາຄານ, ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່; ໗.໑໖

3. ການຄຸ້ມຄອງຂະບວນການຜະລິດ ແລະ ການປຸງແຕ່ງ;
4. ການຄຸ້ມຄອງການນໍາເຂົ້າວັດຖຸດິບ;
5. ການຄຸ້ມຄອງຜະລິດຕະພັນ;
6. ການຄຸ້ມຄອງການກໍາຈັດ ແລະ ບໍາບັດສິ່ງເສດເຫຼືອ;
7. ການຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມໂຮງງານ.

### ມາດຕາ 45 ການສ້າງແຜນການເຄື່ອນໄຫວຂອງໂຮງງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນກິດຈະການໂຮງງານ ຕ້ອງສ້າງແຜນການເຄື່ອນໄຫວ ປະຈໍາງວດ ແລະ ປະຈໍາປີ ຕາມແບບພິມ ຮຽມ ເຊັ່ນ: ແຜນການຜະລິດ, ແຜນການຈໍາໜ່າຍ, ແຜນຄວາມ ຕ້ອງການວັດຖຸດິບປະຈໍາປີ, ໃບຄິດໄລ່ລາຄາຂອງຜະລິດຕະພັນ, ກໍານົດໃນບົດວິພາກເສດຖະກິດ-ເຕັກນິກ, ການສິ້ນເປືອງຕໍ່ຫົວໜ່ວຍຜະລິດຕະພັນ ແລະ ການສະຫຼຸບການນໍາເຂົ້າວັດຖຸດິບ, ອາໄຫຼ່, ອຸປະກອນ, ຊິ້ນສ່ວນ ແລະ ເຄື່ອງຈັກ ແລ້ວນໍາສະເໜີຕໍ່ຂະແໜງການກະສິກໍາ ແລະ ປ່າໄມ້ ເພື່ອພິຈາລະນາຮັບຮອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້ ຕ້ອງ ສະຫຼຸບລາຍງານຂໍ້ມູນການເຄື່ອນໄຫວການຜະລິດຕົວຈິງຂອງໂຮງງານ ຕາມແຜນການເຄື່ອນໄຫວປະຈໍາປີ ສົ່ງ ໃຫ້ຂະແໜງການກະສິກໍາ ແລະ ປ່າໄມ້ ປະຈໍາ ສາມ ເດືອນ, ຫົກ ເດືອນ ແລະ ປະຈໍາປີ.

### ມາດຕາ 46 ການຄຸ້ມຄອງສະຖານທີ່, ອາຄານ, ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່

ສະຖານທີ່ຂອງໂຮງງານ ຕ້ອງຮັບປະກັນບໍ່ໃຫ້ເກີດການປົນເປື້ອນຕໍ່ຂະບວນການຜະລິດ, ການປຸງແຕ່ງ ແລະ ຜະລິດຕະພັນ, ບໍ່ມີການສະສົມຂອງສິ່ງເສດເຫຼືອຈາກການປຸງແຕ່ງ, ບໍ່ມີຝຸ່ນຄວັນຫຼາຍກວ່າປົກກະຕິ, ບໍ່ມີ ສັດລ້ຽງໃນພື້ນທີ່ຂອງໂຮງງານ, ພື້ນທີ່ຮາບພຽງດີບໍ່ມີນໍ້າຂັງ, ບໍ່ມີສິ່ງເປິເປື້ອນອ້ອມຮອບອາຄານ ແລະ ຕ້ອງມີທໍ່ ລະບາຍນໍ້າເສຍ.

ອາຄານຂອງໂຮງງານ ຕ້ອງແຍກທີ່ພັກອາໄສ ແລະ ພື້ນທີ່ການຜະລິດ ອອກຈາກກັນ ພ້ອມທັງໃຫ້ມີ ສາງເກັບມ້ຽນ ຜົນຜະລິດ, ເຄື່ອງມືອຸປະກອນ ແລະ ເຄມີອັນຕະລາຍ ເພື່ອປ້ອງກັນການປົນເປື້ອນ. ອາຄານ ຕ້ອງມີພື້ນ ແລະ ເພດານທີ່ແໜ້ນໜາຮາບພຽງດີ ສາມາດອະນາໄມໄດ້ງ່າຍ, ມີແສງສະຫວ່າງພຽງພໍ ສໍາລັບ ການ ປະຕິບັດງານ, ມີການລະບາຍອາກາດທີ່ເໝາະສົມ ບໍ່ແອອັດ ແລະ ບໍ່ມີຄວາມຊຸ່ມສູງ, ມີມາດຕະການປ້ອງກັນ ການປົນເປື້ອນຈາກສັດ ແລະ ແມງໄມ້.

ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງ ວັດຖຸປະກອນກໍ່ສ້າງໂຮງງານ ຕ້ອງມີແຜນການບໍາລຸງ ຮັກສາ, ແຜນປ້ອງກັນ ແລະ ດໍາເນີນການກວດກາຢ່າງເປັນປະຈໍາ ເພື່ອຮັບປະກັນການນໍາໃຊ້ ໃຫ້ມີຄຸນນະພາບ ສະອາດ, ປອດໄພ ແລະ ປ້ອງກັນອຸປະຕິເຫດ ທີ່ອາດເກີດຂຶ້ນ ຈາກຄວາມຜິດພາດ ໃນການເຮັດວຽກຂອງ ເຄື່ອງຈັກ.

ການນໍາເຂົ້າ ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງ ວັດຖຸປະກອນກໍ່ສ້າງໂຮງງານ ທີ່ນໍາເຂົ້າມາ ໃຊ້ໃນໂຮງງານຕ້ອງມີຄຸນນະພາບດີ, ເປັນເຕັກໂນໂລຊີທີ່ທັນສະໄໝ ແລະ ຖືກຕ້ອງຕາມເປົ້າໝາຍຂອງການ ດໍາເນີນກິດຈະການ ໂດຍສອດຄ່ອງກັບ ບົດວິພາກເສດຖະກິດ-ເຕັກນິກ ແລະ ຕ້ອງຂໍອະນຸຍາດນໍາເຂົ້າຈາກ ຂະແໜງການກະສິກໍາ ແລະ ປ່າໄມ້.

### ມາດຕາ 47 ການຄຸ້ມຄອງຂະບວນການຜະລິດ ແລະ ປຸງແຕ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນກິດຈະການໂຮງງານ ຕ້ອງສ້າງລະບົບຄຸ້ມຄອງຂະບວນ ການຜະລິດ ເປັນຕົ້ນ ການຄຸ້ມຄອງໄມ້ ສິ້ນເຂົ້າ ແລະ ສິ້ນອອກ, ລະບົບຄຸ້ມຄອງຂະບວນການປຸງແຕ່ງ ເພື່ອໃຫ້ ໄດ້ຜະລິດຕະພັນທີ່ມີມາດຕະຖານ, ມີຄຸນນະພາບ ແລະ ມີຄວາມປອດໄພຕໍ່ຜູ້ນໍາໃຊ້ ພ້ອມທັງຮັບປະກັນ ການນໍາໃຊ້ວັດຖຸດິບ ໃຫ້ໝົດຄຸນຄ່າ ແລະ ມີປະສິດທິຜົນສູງ.

**ມາດຕາ 48 ການຄຸ້ມຄອງການນໍາເຂົ້າວັດຖຸດິບ**

ການນໍາເຂົ້າວັດຖຸດິບ ເພື່ອມາທໍາການຜະລິດຢູ່ໃນໂຮງງານ ຕ້ອງຂໍອະນຸຍາດນໍາເຂົ້າ ຈາກຂະແໜງການກະສິກໍາ ແລະ ປ່າໄມ້. ວັດຖຸດິບ ທີ່ນໍາເຂົ້າ ຕ້ອງໄດ້ມາດຕະຖານ ແລະ ມີຄຸນນະພາບດີ, ຖືກຕ້ອງຕາມເປົ້າໝາຍຂອງການຜະລິດ, ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການຜະລິດປະຈໍາປີ ຂອງໂຮງງານ.

ສໍາລັບການນໍາເຂົ້າສານເຄມີ ເພື່ອຮັບໃຊ້ໃນຂະບວນການຜະລິດ ຫຼື ປຸງແຕ່ງ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ສະເພາະ.

**ມາດຕາ 49 ການຄຸ້ມຄອງຜະລິດຕະພັນ**

ຜະລິດຕະພັນທີ່ໄດ້ຜ່ານຂະບວນການຜະລິດ ຕ້ອງຮັບປະກັນໃຫ້ມີຄຸນນະພາບດີ, ໄດ້ມາດຕະຖານ, ມີສຸຂານາໄມທີ່ດີ ແລະ ມີຄວາມປອດໄພຕໍ່ຜູ້ຊົມໃຊ້ ຫຼື ຜູ້ບໍລິໂພກ ໂດຍຖືກຕ້ອງຕາມລະບຽບການທາງດ້ານເຕັກນິກ ຫຼື ມາດຕະຖານໃດໜຶ່ງ ທີ່ຕະຫຼາດຕ້ອງການ.

ຜະລິດຕະພັນ ຕ້ອງເກັບຮັກສາຫຸ້ມຫໍ່ໄວ້ໃຫ້ດີ ແລະ ໃຫ້ແຍກຈາກສານເຄມີທີ່ເປັນອັນຕະລາຍ. ພາຊະນະບັນຈຸຜະລິດຕະພັນຕ້ອງສະອາດ ແລະ ບໍ່ຈີກຂາດ, ການເກັບຮັກສາຕ້ອງຈັດລຽງກອງຜະລິດຕະພັນຢ່າງເປັນລະບຽບ, ບໍ່ປົນກັນ ແລະ ມີປ້າຍຈໍາແນກຊຸດຜະລິດຕະພັນ ຢ່າງຊັດເຈນ.

ໂຮງງານ ຕ້ອງມີລະບົບບັນທຶກຂໍ້ມູນວັດຖຸດິບ, ການຜະລິດ ແລະ ການແຈກຢາຍ ຜະລິດຕະພັນ ຢ່າງຈະແຈ້ງ. ກໍລະນີການນໍາໃຊ້ຜະລິດຕະພັນດັ່ງກ່າວ ຫາກບໍ່ມີຄວາມປອດໄພຕໍ່ສຸຂະພາບ, ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ແມ່ນໃຫ້ດໍາເນີນການ ກວດສອບ ພ້ອມທັງຮຽກເກັບຄືນໃຫ້ຄົບຖ້ວນ ແລະ ທັນເວລາ.

ສໍາລັບຜະລິດຕະພັນໄມ້ ທີ່ຈະສົ່ງອອກຕ່າງປະເທດ ໃຫ້ປະຕິບັດຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 50 ການຄຸ້ມຄອງການກໍາຈັດ ແລະ ບໍາບັດສິ່ງເສດເຫຼືອ**

ການສ້າງຕັ້ງ ແລະ ການດໍາເນີນກິດຈະການໂຮງງານ ທີ່ກໍ່ໃຫ້ເກີດສິ່ງເສດເຫຼືອປະເພດຕ່າງໆເປັນຕົ້ນ ມົນລະພິດທາງ ນໍ້າ, ອາກາດ, ສິ່ງເສດເຫຼືອປະເພດແຂງ ແລະ ອັນຕະລາຍ, ແສງ, ສຽງດັງ, ຄວາມສັ່ນສະເທືອນ ແລະ ອື່ນໆ ຕ້ອງໄດ້ທໍາການບໍາບັດ ແລະ ກໍາຈັດສິ່ງເສດເຫຼືອ ໃຫ້ຢູ່ໃນເກນມາດຕະຖານ ຈຶ່ງສາມາດປ່ອຍອອກສູ່ສິ່ງແວດລ້ອມພາຍນອກໄດ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນກິດຈະການໂຮງງານ ຕ້ອງໄດ້ອອກແບບລະບົບບໍາບັດ ແລະ ກໍາຈັດສິ່ງເສດເຫຼືອຂອງໂຮງງານ ແລ້ວນໍາສະເໜີຕໍ່ຂະແໜງການກະສິກໍາ ແລະ ປ່າໄມ້, ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາຮັບຮອງ, ຫຼັງຈາກນັ້ນ ຈຶ່ງສາມາດດໍາເນີນການກໍ່ສ້າງ, ຕິດຕັ້ງລະບົບບໍາບັດ ແລະ ກໍາຈັດສິ່ງເສດເຫຼືອໄດ້.

**ມາດຕາ 51 ການຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມໂຮງງານ**

ພາຍໃນໂຮງງານປຸງແຕ່ງໄມ້ ຕ້ອງມີລະບົບຮັກສາຄວາມປອດໄພ ເປັນຕົ້ນ ລະບົບປ້ອງກັນອັກຄີໄພ, ລະບົບຄວາມປອດໄພຈາກໄຟຟ້າ, ລະບົບປ້ອງກັນອັນຕະລາຍຈາກເຄື່ອງຈັກ, ລະບົບຮັກສາຄວາມປອດໄພຂອງຄົນງານ ແລະ ມີບຸກຄະລາກອນບໍລິຫານຄວາມປອດໄພ ແລະ ສຸຂານາໄມສະເພາະ ໂດຍມີຈໍານວນພຽງພໍ, ແທດເໝາະກັບ ປະເພດ ແລະ ຂະໜາດຂອງແຕ່ລະໂຮງງານ. ບຸກຄະລາກອນບໍລິຫານຄວາມປອດໄພ ແລະ ສຸຂານາໄມ ມີໜ້າທີ່ໃນການກວດກາ, ຕິດຕາມ, ລາຍງານ, ປະສານສົມທົບ ແລະ ຈັດຝຶກອົບຮົມ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂານາໄມ ແນໃສ່ ຫຼີກລ່ຽງອຸປະຕິເຫດແຮງງານ, ຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ, ຮັກສາຄວາມເປັນລະບຽບ, ຄວາມສະອາດ ແລະ ສຸຂານາໄມພາຍໃນໂຮງງານອຸດສາຫະກໍາປຸງແຕ່ງໄມ້ ໃຫ້ເປັນປົກກະຕິ.

ໃນກໍລະນີ ຫາກເກີດອຸປະຕິເຫດທີ່ເຮັດໃຫ້ລະບົບການຜະລິດເສຍຫາຍ ແລະ ເປ່ເພ, ເຮັດໃຫ້ຄົນບາດເຈັບ ຫຼື ເສຍຊີວິດ ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບທັນທີ ເພື່ອຫາມາດຕະການແກ້ໄຂ.

## ພາກທີ VI
## ການປ່ຽນແປງ ແລະ ການດັດສົມ ຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້
## ໝວດທີ 1
## ການປ່ຽນແປງ ໂຮງງານອຸດຫະກຳປຸງແຕ່ງໄມ້

**ມາດຕາ 52 ການປ່ຽນແປງໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການປ່ຽນແປງໂຮງງານ ປະກອບມີ ດັ່ງນີ້:

1. ການຂະຫຍາຍໂຮງງານ;
2. ການຍົກຍ້າຍໂຮງງານ;
3. ການຍົກຍ້າຍເຄື່ອງຈັກ;
4. ການໂອນ, ການໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານ;
5. ການສືບທອດການດຳເນີນກິດຈະການໂຮງງານ;
6. ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ.

**ມາດຕາ 53 ການຂະຫຍາຍໂຮງງານ**

ການຂະຫຍາຍໂຮງງານ ມີ ສາມ ຮູບການຄື: ການເພີ່ມເຄື່ອງຈັກ, ການເພີ່ມເນື້ອທີ່ອາຄານຜະລິດຂອງໂຮງງານ ແລະ ການເພີ່ມທັງສອງຢ່າງພ້ອມກັນ.

1. **ການຂະຫຍາຍໂຮງງານ ໂດຍການເພີ່ມເຄື່ອງຈັກ ຈະດຳເນີນໄດ້ສຳລັບໂຮງງານຂະໜາດກາງ, ຂະໜາດນ້ອຍ ແລະ ໂຮງເຟີນີເຈີແບບຄອບຄົວ ເທົ່ານັ້ນ ແລະ ມີ ສອງ ກໍລະນີ ດັ່ງນີ້:**

ກໍລະນີທີ ໜຶ່ງ: ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານ ເພີ່ມກຳລັງແຮງຂອງເຄື່ອງຈັກ ແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ກໍລະນີທີ ສອງ: ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານ ເພີ່ມກຳລັງແຮງຂອງເຄື່ອງຈັກ ແຕ່ ຫ້າສິບ ແຮງມ້າ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

2. **ການຂະຫຍາຍໂຮງງານ ໂດຍການເພີ່ມເນື້ອທີ່ອາຄານ ມີ ສອງ ກໍລະນີ ດັ່ງນີ້:**

ກໍລະນີທີ ໜຶ່ງ: ອາຄານຜະລິດຂອງໂຮງງານ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ ສອງຮ້ອຍ ຕາແມັດ, ຖ້າເພີ່ມເນື້ອທີ່ ແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ກໍລະນີທີ ສອງ: ອາຄານຜະລິດຂອງໂຮງງານ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ ສອງຮ້ອຍ ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ໜຶ່ງຮ້ອຍ ຕາແມັດຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ການຂະຫຍາຍໂຮງງານ ດ້ວຍການເພີ່ມອາຄານທີ່ບໍ່ແມ່ນ ອາຄານຜະລິດ, ສາງວັດຖຸດິບ, ສາງຜະລິດຕະພັນ ຫຼື ຫ້ອງການບໍລິຫານອື່ນໆ ບໍ່ຖືວ່າເປັນການຂະຫຍາຍ ແຕ່ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບການກ່ຽວກັບ ການປຸກສ້າງ.

ຜູ້ດຳເນີນກິດຈະການໂຮງງານ ສາມາດຂະຫຍາຍໂຮງງານຢູ່ໃນສະຖານທີ່ດຽວກັນໄດ້ ແຕ່ຕ້ອງປະຕິບັດຕາມຂັ້ນຕອນຄືກັນກັບການຂໍດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃນສ່ວນທີ່ຂະຫຍາຍ.

**ມາດຕາ 54 ການຍົກຍ້າຍໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ສາມາດຍົກຍ້າຍໂຮງງານ ໄປຕັ້ງຢູ່ສະຖານທີ່ອື່ນໄດ້ ແຕ່ຕ້ອງໄດ້ຮັບການອະນຸຍາດ ແລະ ປະກອບເອກະສານ ທີ່ກ່ຽວຂ້ອງ ກ່ຽວກັບ ການສ້າງຕັ້ງ ແລະ ດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຢູ່ສະຖານທີ່ໃໝ່ ຕາມມາດຕາ 27, 28 ແລະ 36 ຂອງຂໍ້ຕົກລົງສະບັບນີ້. ກ່ອນຍົກຍ້າຍໂຮງງານ ຕ້ອງສະເໜີຂໍຢຸດເຊົາ ແລະ ຍຸບເລີກໂຮງງານຫຼັງເດີມ ຕາມມາດຕາ 41 ຂອງຂໍ້ຕົກລົງສະບັບນີ້ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້.

ສຳລັບເຄື່ອງຈັກ ແລະ ສິ່ງປຸກສ້າງ ຕ້ອງຂໍອະນຸຍາດຈາກ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

**ມາດຕາ 55 ການຍົກຍ້າຍເຄື່ອງຈັກ**

ຜູ້ດຳເນີນກິດຈະການໂຮງງານ ສາມາດຍົກຍ້າຍເຄື່ອງຈັກໄປສະຖານທີ່ໂຮງງານອື່ນໄດ້ ຊຶ່ງມີ ສອງ ຮູບການ ຄື ການຍົກຍ້າຍເຄື່ອງຈັກຊົ່ວຄາວ ແລະ ການຍົກຍ້າຍເຄື່ອງຈັກຖາວອນ ໂດຍປະຕິບັດຕາມຂັ້ນຕອນດັ່ງນີ້:

1. ການຍົກຍ້າຍເຄື່ອງຈັກບາງສ່ວນຢູ່ພາຍໃນໂຮງງານ ໄປຍັງສະຖານທີ່ອື່ນເປັນການຊົ່ວຄາວ ໃຫ້ຍື່ນໃບສະເໜີຂໍຍົກຍ້າຍເຄື່ອງຈັກ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ, ຄັດຕິດລາຍການເຄື່ອງຈັກ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຍົກຍ້າຍດັ່ງກ່າວ, ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຕ້ອງເອົາກັບຄືນພາຍໃນ ໜຶ່ງ ປີ ນັບແຕ່ວັນທີ່ໄດ້ຮັບອະນຸຍາດເປັນຕົ້ນໄປ, ກໍລະນີຫາກມີຄວາມຈຳເປັນຕ້ອງການນຳໃຊ້ເກີນ ໜຶ່ງ ປີ ສາມາດສະເໜີຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ໂດຍຊີ້ແຈງເຫດຜົນໃຫ້ລະອຽດເພື່ອຂໍຕໍ່ກຳນົດເວລາ, ແຕ່ສູງສຸດຕໍ່ໄດ້ບໍ່ເກີນ ໜຶ່ງ ປີ, ພ້ອມນີ້ ຕ້ອງລະບຸເງື່ອນໄຂ ຫຼື ວິທີການ ເພື່ອຮັບປະກັນຄວາມປອດໄພໃນການຂົນສົ່ງ;
2. ການຍົກຍ້າຍເຄື່ອງຈັກຖາວອນ ໃນກໍລະນີໃດໜຶ່ງ ເປັນຕົ້ນ ເຄື່ອງຈັກເປ່ເພ ແລະ ນຳໃຊ້ບໍ່ໄດ້, ຂາຍ ຫຼື ໂອນໃຫ້ບຸກຄົນອື່ນ ຊຶ່ງມີຄວາມຈຳເປັນຕ້ອງຮື້ຖອນອອກຈາກໂຮງງານໄປບ່ອນອື່ນ ຕ້ອງລາຍງານຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຊາບ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ ແລະ ຄັດຕິດ ລາຍການເຄື່ອງຈັກ ເພື່ອລົງກວດກາກ່ອນຮື້ຖອນ ແລະ ໃນນັ້ນ ຕ້ອງດັດແກ້ລາຍການເຄື່ອງຈັກເດີມ ແລະ ແຜນຜັງການຕິດຕັ້ງເຄື່ອງຈັກຄືນໃໝ່ ພາຍໃນ ສິບຫ້າ ວັນ.

**ມາດຕາ 56 ການໂອນ, ການໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານ**

ໃນກໍລະນີມີການ ໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານ ໃຫ້ຜູ້ອື່ນ ພາຍຫຼັງສິ້ນສຸດຂັ້ນຕອນ ຕາມທີ່ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຜູ້ດຳເນີນກິດຈະການໂຮງງານຜູ້ເກົ່າ ຕ້ອງລາຍງານໃຫ້ ຂະແໜງການກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນ ສິບຫ້າ ວັນ ນັບແຕ່ມື້ໄດ້ເຊັນສັນຍາການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານເປັນຕົ້ນໄປ;

ຜູ້ໄດ້ຮັບການໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ກິດຈະການໂຮງງານນັ້ນ ຕ້ອງຍື່ນຄຳຮ້ອງ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຫຼື ຂະແໜງການແຜນການ ແລະ ການລົງທຶນ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ ແລະ ໃບຢັ້ງຢືນການດຳເນີນກິດຈະການໂຮງງານ ໂດຍປ່ຽນຊື່ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຈາກເຈົ້າຂອງເດີມມາເປັນຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ກິດຈະການ ພາຍໃນສາມສິບ ວັນ ນັບແຕ່ມື້ໄດ້ເຊັນສັນຍາໂອນ, ເຊົ່າ ຫຼື ຊື້ກິດຈະການ ດັ່ງກ່າວ.

**ມາດຕາ 57 ການສືບທອດການດຳເນີນກິດຈະການໂຮງງານ**

ໃນກໍລະນີຜູ້ດຳເນີນກິດຈະການໂຮງງານ ຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບຄອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ຊາບພາຍໃນ ຫົກສິບ ວັນ ນັບແຕ່ວັນທີ ທີ່ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ໄດ້ເສຍຊີວິດ ແລະ ສະເໜີຂໍປ່ຽນແປງເນື້ອໃນ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ ແລະ

໑.໑໗

ໃບຢັ້ງຢືນ ການດຳເນີນກິດຈະການໂຮງງານອຸດທາສະກຳປຸງແຕ່ງໄມ້ ໂດຍປ່ຽນຊື່ຈາກຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ.

ພາຍຫຼັງ ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ໄດ້ເສຍຊີວິດເກີນ ເກົ້າສິບ ວັນ ຫາກບໍ່ມີຜູ້ສະເໜີຂໍສືບທອດ ຖືວ່າໃບຢັ້ງຢືນການດຳເນີນກິດຈະການໂຮງງານນັ້ນ ໄດ້ໝົດອາຍຸລົງ ພ້ອມກັບການເສຍຊີວິດຂອງຜູ້ດຳເນີນກິດຈະການໂຮງງານ. ຖ້າຫາກມີຜູ້ສືບທອດການດຳເນີນກິດຈະການໂຮງງານຄືນໃໝ່ພາຍຫຼັງໝົດກຳນົດເວລາທີ່ລະບຸໄວ້ ໃຫ້ປະຕິບັດ ຕາມຂັ້ນຕອນຄືກັນກັບການຂໍດຳເນີນກິດຈະການໂຮງງານໃໝ່.

**ມາດຕາ 58 ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ**

ການດຳເນີນກິດຈະການໂຮງງານ ສາມາດປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານໄດ້ ແຕ່ຕ້ອງສະເໜີຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຫຼື ຂະແໜງການແຜນການ ແລະ ການລົງທຶນ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມການແບ່ງຂັ້ນຄຸ້ມຄອງ.

## ໝວດທີ 2
## ການດັດສົມ ໂຮງງານອຸດຫະກຳປຸງແຕ່ງໄມ້

**ມາດຕາ 59 ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ແມ່ນ ການປັບປຸງ ແລະ ພັດທະນາໂຮງງານ ໃຫ້ໄດ້ມາດຕະຖານ, ເພີ່ມປະສິດທິພາບການຜະລິດ, ສ້າງມູນຄ່າເພີ່ມ, ຍົກລະດັບສີມືແຮງງານ, ພັດທະນາຜະລິດຕະພັນ ໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານ, ປະຢັດວັດຖຸດິບ, ປະຢັດພະລັງງານ, ພັດທະນາໃຫ້ເປັນໂຮງງານສີຂຽວ, ເປັນມິດກັບສິ່ງແວດລ້ອມ, ເຄື່ອນໄຫວໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ຕາມນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ.

**ມາດຕາ 60 ຂັ້ນຕອນການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກວດກາໂຮງງານ;
2. ກຳນົດແຜນການປັບປຸງໂຮງງານ;
3. ຢັ້ງຢືນຜົນການປັບປຸງໂຮງງານ.

**ມາດຕາ 61 ການກວດກາໂຮງງານ**

ການກວດກາໂຮງງານ ແມ່ນ ການກວດກາດ້ານເອກະສານການອະນຸຍາດທີ່ກ່ຽວຂ້ອງ, ການນຳໃຊ້ວັດຖຸດິບ, ມາດຕະຖານເຕັກນິກໂຮງງານ ຕາມແຕ່ລະມາດຕະຖານທີ່ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້ ພ້ອມທັງເຮັດບົດບັນທຶກຜົນຂອງການກວດກາ ຕາມແຕ່ລະກໍລະນີ ດັ່ງນີ້:

1. ກວດກາຄືນບັນດາເອກະສານ ການອະນຸຍາດ ຕາມທີ່ກຳນົດໄວ້ໃນມາດຕາ 29 ແລະ 36 ຂອງຂໍ້ຕົກລົງ ສະບັບນີ້;
2. ກວດກາດ້ານທີ່ຕັ້ງໂຮງງານ ຕາມທີ່ກຳນົດໄວ້ໃນມາດຕາ 12 ແລະ 22 ຂອງຂໍ້ຕົກລົງສະບັບນີ້;
3. ກວດກາອາຄານໂຮງງານ, ເຄື່ອງຈັກ, ຂະບວນການຜະລິດ, ລະບົບຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມໂຮງງານ;
4. ກວດກາຄວາມຖືກຕ້ອງຂອງວັດຖຸດິບ ທີ່ນຳເຂົ້າໂຮງງານ;
5. ເຮັດບົດບັນທຶກຜົນການກວດກາໂຮງງານ. ໑.໑໒

**ມາດຕາ 62 ການກຳນົດແຜນການປັບປຸງໂຮງງານ**

ພາຍຫຼັງການລົງກວດກາໂຮງງານ ໃຫ້ຜູ້ດຳເນີນກິດຈະການໂຮງງານປະຕິບັດ ດັ່ງນີ້:

1. ສ້າງແຜນການປັບປຸງໂຮງງານ ຕາມຄຳແນະນຳຂອງຄະນະກຳມະການກວດກາ ໂດຍກຳນົດໄລຍະເວລາຂອງການປັບປຸງ ແລ້ວສະເໜີຕໍ່ພະແນກກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ ພ້ອມທັງ ສັງລວມລາຍງານ ຕໍ່ກົມປ່າໄມ້ ເພື່ອພິຈາລະນາແຜນການປັບປຸງ ແລະ ແຈ້ງໃຫ້ໂຮງງານຈັດຕັ້ງປະຕິບັດ;
2. ໃນໄລຍະການປັບປຸງ ໂຮງງານຕ້ອງຢຸດເຊົາຊົ່ວຄາວສຳລັບຂອດການຜະລິດທີ່ຖືກປັບປຸງ ໂດຍໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ/ນະຄອນຫຼວງວຽງຈັນ ສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ/ນະຄອນ ລົງຕິດຕາມກວດກາການປັບປຸງໂຮງງານ ຈົນກວ່າຈະສຳເລັດ;
3. ກໍລະນີການປັບປຸງໂຮງງານ ບໍ່ສຳເລັດຕາມແຜນທີ່ໄດ້ກຳນົດໄວ້ ໃຫ້ຢຸດເຊົາການດຳເນີນກິດຈະການໂຮງງານຊົ່ວຄາວ, ບໍ່ອະນຸຍາດໃຫ້ເຂົ້າຮ່ວມການປະມູນຊື້-ຂາຍ ໄມ້ ແລະ ຫ້າມນຳວັດຖຸດິບເຂົ້າໂຮງງານ.

**ມາດຕາ 63 ການຢັ້ງຢືນຜົນການປັບປຸງໂຮງງານ**

ພາຍຫຼັງປັບປຸງໂຮງງານສຳເລັດ ໃຫ້ໂຮງງານປະກອບເອກະສານ ຂໍດຳເນີນກິດຈະການໂຮງງານ ຕາມທີ່ກຳນົດໄວ້ໃນມາດຕາ 36 ຂອງຂໍ້ຕົກລົງ ສະບັບນີ້ ເພື່ອພິຈາລະນາ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານຄືນໃໝ່ ຕາມການແບ່ງຂັ້ນຄຸ້ມຄອງ.

## ພາກທີ VII
## ອົງການຄຸ້ມຄອງ ແລະ ກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້

**ມາດຕາ 64 ອົງການຄຸ້ມຄອງ ແລະ ກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້**

ອົງການຄຸ້ມຄອງ ແລະ ກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ແມ່ນຂະແໜງການກະສິກຳ ແລະ ປ່າໄມ້ ປະກອບມີ ດັ່ງນີ້:

1. ຂັ້ນກະຊວງ ແມ່ນ ກົມປ່າໄມ້;
2. ຂັ້ນແຂວງ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຂັ້ນເມືອງ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ.

**ມາດຕາ 65 ສິດ ແລະ ໜ້າທີ່ ຂອງກົມປ່າໄມ້**

ກົມປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ/ນະຄອນ ແລະ ເຈົ້າຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້;
2. ຄົ້ນຄວ້ານຳສະເໜີ ຕໍ່ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອອອກຂໍ້ຕົກລົງ ສ້າງຕັ້ງ, ໂຈະ ແລະ ຍຸບເລີກ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດໃຫຍ່;
3. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍຸບເລີກ ໃບຢັ້ງຢືນ ດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້;
4. ສົມທົບກັບພະແນກກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ ເພື່ອຕິດຕາມກວດກາ ມາດຕະຖານ ເຕັກນິກ, ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມ ໂຮງງານ, ການຈັດຕັ້ງປະຕິບັດການປັບປຸງ ດັດສົມ ໂຮງງານອຸດສາຫະກຳປຸງແຕ່ງໄມ້, ໄມ້ ສົ້ນເຂົ້າ ແລະ ສົ້ນອອກ

໒໒

ໂຮງງານ ໃນທົ່ວປະເທດ ຕາມສິດ ແລະ ໜ້າທີ່ ທີ່ກຳນົດໄວ້ ໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ຕິດຕາມ ໄມ້ ສົ້ນເຂົ້າ ແລະ ສົ້ນອອກ;

5. ສະຫຼຸບລາຍງານວຽກງານ ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ການນຳກະຊວງກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 66 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຕັ້ງຢູ່ໃນ ແຂວງ/ນະຄອນຫຼວງວຽງຈັນ ຂອງຕົນ;
2. ຄົ້ນຄວ້ານຳສະເໜີ ເຈົ້າແຂວງ/ນະຄອນຫຼວງວຽງຈັນ ເພື່ອອອກ ຂໍ້ຕົກລົງ ສ້າງຕັ້ງ, ໂຈະ ແລະ ຍຸບເລີກ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຂະໜາດ ກາງ ແລະ ນ້ອຍ;
3. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍຸບເລີກ ໃບຢັ້ງຢືນດຳເນີນກິດຈະການໂຮງງານ ຂະໜາດ ກາງ ແລະ ນ້ອຍ;
4. ຄຸ້ມຄອງ ແລະ ຕິດຕາມກວດກາ ມາດຕະຖານ ເຕັກນິກ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ ໂຮງງານ ແລະ ຕິດຕາມ ການປັບປຸງດັດສົມ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຢູ່ໃນແຂວງ/ນະຄອນຫຼວງວຽງຈັນ ຂອງຕົນ;
5. ຢັ້ງຢືນແຜນການເຄື່ອນໄຫວປະຈຳງວດ ແລະ ປະຈຳປີ ຂອງໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ;
6. ຕິດຕາມກວດກາໄມ້ ສົ້ນເຂົ້າ ແລະ ສົ້ນອອກ ໂຮງງານທີ່ຕັ້ງຢູ່ໃນ ແຂວງ/ນະຄອນຫຼວງວຽງຈັນ ຕາມສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ຕິດຕາມ ໄມ້ ສົ້ນເຂົ້າ ແລະ ສົ້ນອອກ;
7. ສະຫຼຸບລາຍງານວຽກງານ ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ການນຳຂັ້ນແຂວງ ແລະ ການນຳກະຊວງກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ເຈົ້າຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຕັ້ງຢູ່ໃນເມືອງຂອງຕົນ;
2. ຄົ້ນຄວ້ານຳສະເໜີ ເຈົ້າເມືອງ/ນະຄອນ ເພື່ອອອກ ຂໍ້ຕົກລົງ ສ້າງຕັ້ງ, ໂຈະ ແລະ ຍຸບເລີກ ໂຮງເຟີນີເຈີແບບຄອບຄົວ;
3. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍຸບເລີກ ໃບຢັ້ງຢືນດຳເນີນກິດຈະການ ໂຮງເຟີນີເຈີແບບຄອບຄົວ;
4. ຕິດຕາມກວດກາ ມາດຕະຖານ ເຕັກນິກ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ ແລະ ຕິດຕາມການປັບປຸງດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຕັ້ງຢູ່ໃນເມືອງ ຂອງຕົນ;
5. ຕິດຕາມກວດກາໄມ້ ສົ້ນເຂົ້າ ແລະ ສົ້ນອອກໂຮງງານ ທີ່ຕັ້ງຢູ່ໃນເມືອງ ຂອງຕົນ ຕາມສິດ ແລະ ໜ້າທີ່ ທີ່ກຳນົດໄວ້ ໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ຕິດຕາມ ໄມ້ ສົ້ນເຂົ້າ ແລະ ສົ້ນອອກ;
6. ສະຫຼຸບລາຍງານວຽກງານ ການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ການນຳຂັ້ນເມືອງ ແລະ ການນຳພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໃນແຕ່ລະໄລຍະ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ. ໙.໑໙

**ມາດຕາ 68 ການກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການກວດກາ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ແມ່ນ ການກວດກາ ການດຳເນີນກິດຈະການ, ສະພາບເຕັກນິກ ຂອງອາຄານໂຮງງານ, ເຄື່ອງຈັກ, ຂະບວນການຜະລິດ, ຄວາມປອດໄພ, ສຸຂານາໄມໂຮງງານ, ຄວາມປອດໄພແຮງງານ, ການນຳໃຊ້ແຮງງານ, ຜະລິດຕະພັນ, ລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ ແລະ ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງ ການປະຕິບັດສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານ.

**ມາດຕາ 69 ຮູບການກວດກາໂຮງງານອຸດສາຫະກຳປຸງແຕ່ງໄມ້**

ການກວດກາໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

**ມາດຕາ 70 ການກວດກາຕາມລະບົບປົກກະຕິ**

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ຕາມແຜນການ, ຕາມຂັ້ນຕອນ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງປະກອບດ້ວຍ ການກວດກາ ກ່ອນການສ້າງຕັ້ງໂຮງງານ, ການດຳເນີນກິດຈະການ, ການຕໍ່ອາຍຸ, ການຂະຫຍາຍ ແລະ ການສິ້ນສຸດກິດຈະການ ໂຮງງານ.

ການກວດກາປົກກະຕິ ຕ້ອງສ້າງແຜນລົງກວດກາໂດຍກຳນົດວັນເວລາຢ່າງຈະແຈ້ງ ແລະ ຕ້ອງໄດ້ປະຕິບັດເປັນປະຈຳຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ, ກ່ອນລົງກວດກາ ຕ້ອງແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານ ຊາບກ່ອນລ່ວງໜ້າຢ່າງໜ້ອຍ ສາມ ວັນ ກ່ອນມື້ລົງກວດກາ ພ້ອມທັງເຮັດບົດບັນທຶກຜົນຂອງການລົງກວດກາ.

**ມາດຕາ 71 ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ**

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາຕາມແຜນ ຫຼື ນອກແຜນ, ກ່ອນລົງກວດກາແຕ່ລະຄັ້ງ ຕ້ອງແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານ ທີ່ຈະລົງກວດກາຮັບຊາບກ່ອນລ່ວງໜ້າ ຢ່າງໜ້ອຍ ຫ້າ ວັນ.

ການກວດການອກແຜນ ແມ່ນການກວດກາໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ຫຼື ຕາມຄຳສັ່ງທີ່ຕ້ອງໄດ້ລົງກວດກາ ເຊັ່ນ: ການສ້າງຕັ້ງ, ການຂະຫຍາຍ ຫຼື ການເຄື່ອນໄຫວກິດຈະການ ໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 72 ການກວດກາແບບກະທັນຫັນ**

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນເປັນຕົ້ນ ມີຄຳສັ່ງຊີ້ນຳຂອງຂັ້ນເທິງ, ຕາມແຫຼ່ງຂ່າວ, ຕາມການສະເໜີ, ຕາມການຮ້ອງຟ້ອງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ທີ່ເປັນຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ, ການເຄື່ອນໄຫວຂອງໂຮງງານບໍ່ຖືກຕ້ອງ ຕາມເປົ້າໝາຍຂອງການອະນຸຍາດ, ເຄື່ອນໄຫວຜິດຕໍ່ລະບຽບກົດໝາຍ, ເກີດອຸປະຕິເຫດແຮງງານ, ເກີດອັກຄີໄພມີຜົນເສຍຫາຍຮ້າຍແຮງຕໍ່ຊີວິດ ແລະ ຊັບສິນ.

ການກວດກາແບບກະທັນຫັນ ແມ່ນລົງກວດກາໄດ້ທຸກເວລາ ໂດຍທີ່ບໍ່ໄດ້ແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານ ຊາບ ພ້ອມທັງເຮັດບົດບັນທຶກກວດກາ. ໜ.໒໑

# ພາກທີ VIII
# ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້

**ມາດຕາ 73 ສິດ ຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີ ສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດໂຮງງານ ແລະ ຜົນປະໂຫຍດທີ່ໄດ້ຮັບຈາກການດຳເນີນກິດຈະການໂຮງງານ;
2. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດຳເນີນກິດຈະການໂຮງງານ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
3. ເຄື່ອນໄຫວດຳເນີນກິດຈະການ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ ໃນໃບຢັ້ງຢືນການດຳເນີນກິດຈະການໂຮງງານ;
4. ສະເໜີຂໍນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ, ການແນະນຳຈາກພາກລັດ ແລະ ພາກສ່ວນອື່ນທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບ ການດຳເນີນກິດຈະການໂຮງງານ;
5. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຂາຍ, ຂະຫຍາຍ ແລະ ຢຸດເຊົາ ກິດຈະການໂຮງງານ ຕາມລະບຽບການ;
6. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
7. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 74 ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີ ພັນທະ ດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານ ຕາມບົດວິພາກເສດຖະກິດ-ເຕັກນິກ, ມາດຕະຖານເຕັກນິກ ແລະ ໃບຢັ້ງຢືນການດຳເນີນກິດຈະການໂຮງງານ;
2. ມອບພັນທະ ພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
3. ປະຕິບັດຕາມລະບຽບການ ກ່ຽວກັບ ການນຳໃຊ້ແຮງງານ ເປັນຕົ້ນ ຄ່າແຮງງານ, ສະຫວັດດີການ ອຸປະກອນປ້ອງກັນຄວາມປອດໄພຂອງຄົນງານ ແລະ ອື່ນໆ;
4. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນໂຮງງານ ໂດຍການສ້າງຕັ້ງໜ່ວຍງານຄຸ້ມຄອງຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ເຄມີ ແລະ ໄພພິບັດປະຈຳໂຮງງານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;
5. ລາຍງານ ການເກີດອຸປະຕິເຫດຂັ້ນຮ້າຍແຮງພາຍໃນໂຮງງານ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
6. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານຕັ້ງຢູ່ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;
7. ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບ ການເຄື່ອນໄຫວໂຮງງານຂອງຕົນ ໃຫ້ການຈັດຕັ້ງລັດ ທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ;
8. ແຈ້ງເຫດຜົນຂອງການຢຸດເຊົາ ຊົ່ວຄາວ, ຖາວອນ ຫຼື ການລົ້ມລະລາຍ ໃຫ້ຂະແໜງກະສິກຳ ແລະ ປ່າໄມ້;
9. ກ່ອນຢຸດເຊົາດຳເນີນກິດຈະການໂຮງງານຖາວອນ ຕ້ອງໄດ້ກຳຈັດ ຫຼື ບຳບັດສິ່ງເສດເຫຼືອອັນຕະລາຍໃຫ້ຖືກຕ້ອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
10. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການຈັດຕັ້ງປະຕິບັດວຽກງານຕາມ ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ລັດ;
11. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີ IX
# ຂໍ້ຫ້າມ

**ມາດຕາ 75 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ອອກ, ໂຈະ ຫຼື ຍຸບເລີກ ໃບຢັ້ງຢືນການດຳເນີນກິດຈະການໂຮງງານ ທີ່ບໍ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;
2. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງໃນທຸກຮູບແບບ ຕໍ່ກັບການສົ່ງເສີມ ແລະ ພັດທະນາວຽກງານປຸງແຕ່ງໄມ້;
3. ອະນຸຍາດທຸກຮູບແບບ ໃຫ້ໂຮງງານ ເຄື່ອນໄຫວກິດຈະການ ທີ່ບໍ່ມີໃບຢັ້ງຢືນການດຳເນີນກິດຈະການໂຮງງານ ຫຼື ບໍ່ລາຍງານ ການດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຜິດກົດໝາຍ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 76 ຂໍ້ຫ້າມ ສຳລັບ ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້**

ຫ້າມ ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສ້າງຕັ້ງ, ຍົກຍ້າຍ, ດຳເນີນກິດຈະການ ແລະ ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຕິດຕັ້ງເຄື່ອງຈັກ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຕັ້ງໂຮງງານ ຢູ່ໃນເຂດປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ຫຼື ເຂດຫວງຫ້າມ;
4. ໃຫ້ສິນບົນແກ່ ເຈົ້າໜ້າທີ່ ແລະ ພະນັກງານ;
5. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບ ໃບຢັ້ງຢືນການດຳເນີນກິດຈະການ ໂຮງງານອຸດສາຫະກຳປຸງແຕ່ງໄມ້;
6. ນຳເຂົ້າວັດຖຸດິບ, ເຄື່ອງຈັກ ຫຼື ແຮງງານ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ນຳເຂົ້າ ຫຼື ນຳໃຊ້ທາດເຄມີອັນຕະລາຍໂດຍບໍ່ໄດ້ຮັບອະນຸຍາດ;
8. ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ່ວ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ກວດກາໂຮງງານອຸດສາຫະກຳປຸງແຕ່ງໄມ້ໄດ້ນຳໃຊ້ໜີບໃສ່ເຄື່ອງຈັກໃຫ້ຢຸດເຊົາການເຄື່ອນໄຫວ;
9. ປ່ຽນຊື່ໂຮງງານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້;
10. ປອມແປງເອກະສານ, ປົດບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
11. ປ່ອຍ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານ ຕາມລະບຽບການ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 77 ຂໍ້ຫ້າມ ສຳລັບ ເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ ຂະແໜງການກະສິກຳ ແລະ ປ່າໄມ້ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
2. ໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ ແລະ ຜູ້ປະກອບການ; ພ.ອ

3. ເມີນເສີຍຕໍ່ການລາຍງານ ກ່ຽວກັບ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ເຄື່ອນໄຫວບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;
4. ເປີດເຜີຍເອກະສານ ຂອງຜູ້ປະກອບການໂຮງງານອຸດສາຫະກຳປຸງແຕ່ງໄມ້;
5. ກົດໜ່ວງ, ຖ່ວງດຶງເອກະສານ ຫຼື ປອມແປງລາຍເຊັນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 78 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 79 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ຫາກລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ດຳເນີນທາງແພ່ງ ຫຼື ອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

### ມາດຕາ 80 ການຈັດຕັ້ງປະຕິບັດ

ໃຫ້ ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 81 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງ ວ່າດ້ວຍໂຮງງານອຸດສາຫະກຳປຸງແຕ່ງໄມ້ ສະບັບເລກທີ 0222/ອຄ.ກອຫ, ລົງວັນທີ 23 ມີນາ 2021 ແລະ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ